# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-23 ເມສາ 2024
ປີທີ 13
ສະບັບທີ 966
ລາຍສັປະດາ


## ຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານຢູ່ 3 ແຂວງພາກໃຕ້



(ສພຊ) - ປະຕິບັດຕາມພາລະບົດບາດຂອງສະພາແຫ່ງຊາດໃນການຕິດຕາມກວດກາ ແລະ ເພື່ອຕິດຕາມການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ສະບັບປັບປຸງປີ 2021 ແນໃສ່ຮັບປະກັນເຮັດໃຫ້ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໄດ້ຮັບການປະຕິບັດຢ່າງເຂັ້ມງວດ, ຄົບຖ້ວນ, ຖືກຕ້ອງຕາມກົດໝາຍທີ່ກຳນົດໄວ້ ແລະ ເພື່ອເປັນຂໍ້ມູນພື້ນຖານກະກຽມລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ກໍຄືກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ແລະ ເປັນບ່ອນອີງໃນການປຶກສາຫາລືແລະສະເໜີພາກສ່ວນກ່ຽວຂ້ອງຄົ້ນຄວ້າມາດຕະການແກ້ໄຂ.

ໃນລະຫວ່າງວັນທີ 04-08 ເມສາ 2024 ການນຳຂັ້ນສູງຂອງສະພາແຫ່ງຊາດນຳໂດຍທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານຄະນະປະຈຳສະພາແຫ່ງຊາດ, ທ່ານ ຄຳແພງ ວິລະພັນ ປະທານກຳມາທິການ

ອ່ານຕໍ່ໜ້າ 7




## ຮອງປະທານ ສພຊ ຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ



(ສພຊ) - ວັນທີ 08 ເມສາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ໄດ້ມີກອງປະຊຸມຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານຢູ່ຊຽງຂວາງ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ (ສພຊ), ປະທານກຳມາທິການກົດໝາຍ; ມີທ່ານ ພົຕ. ປອ. ວິງສັກ ພົມທະວົງ ປະທານກຳມາທິການ ປກຊ-ປກສ, ທ່ານ ທໍນີທາ ຕົ່ງປາວ

ອ່ານຕໍ່ໜ້າ 7

## ກອງປະຊຸມກຳມາທິການວຽກງານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ຂອງ APF




(ສພຊ) - ໃນລະຫວ່າງວັນທີ 10-11 ເມສາ 2024 ກຳມາທິການການຕ່າງປະເທດ ສະພາແຫ່ງຊາດ ແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມກຳມາທິການວຽກງານເສດຖະກິດ, ສັງຄົມ ແລະສິ່ງແວດລ້ອມຂອງສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ (APF) ທີ່ນະຄອນຫຼວງພະບາງ.

ກອງປະຊຸມໃນຄັ້ງນີ້ໄດ້ໃຫ້ກຽດເຂົ້າຮ່ວມ ແລະ ກ່າວເປີດກອງປະຊຸມໂດຍທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ແລະ ກ່າວຕ້ອນຮັບຄະນະຜູ້ແທນກອງປະຊຸມ ໂດຍທ່ານ ວິງສະຫວັນ ເທບພະຈັນ ປະທານສະພາປະຊາຊົນແຂວງຫຼວງພະບາງ; ມີບັນດາສະ

ອ່ານຕໍ່ໜ້າ 8

## ຕິດຕາມກວດກາ, ຊຸກຍູ້ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຢູ່ເຂດພື້ນຖານການປະຕິວັດ




(ສພຊ) - ໃນລະຫວ່າງວັນທີ 02-08 ເມສາ 2024 ທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ລົງເຄື່ອນໄຫວຕິດຕາມກວດກາແລະຊຸກຍູ້ການພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກເຂດພື້ນຖານການປະຕິວັດ ຢູ່ 3 ເມືອງຂອງແຂວງຫົວພັນ ຄື: ຊຳເໜືອ, ຊຽງຄໍ້ ແລະ ເມືອງກວັນ ໂດຍມີປະທານ-ຮອງປະທານສະພາປະຊາຊົນແຂວງຫົວພັນ ພ້ອມດ້ວຍທີມງານຈາກສະພາແຫ່ງຊາດແລະສະພາປະຊາຊົນແຂວງເຂົ້າຮ່ວມຕິດຕາມ.

ໃນການເຄື່ອນໄຫວ, ໄດ້ເປີດກອງປະຊຸມຮ່ວມກັບສະພາປະຊາຊົນແຂວງ ແລະ ອົງການປົກຄອງເມືອງຊຽງຄໍ້ເພື່ອຮັບຟັງການລາຍງານຈາກບັນດາພະ

ອ່ານຕໍ່ໜ້າ 8

## ປິດຊຸດເຝິກອົບຮົມພາສາຫວຽດນາມ ຊຸດທີ II



(ສພຊ) ພິທີປິດຊຸດເຝິກອົບຮົມພາສາຫວຽດນາມໃຫ້ແກ່ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ ໄດ້ຈັດຂຶ້ນໃນຕອນເຊົ້າວັນຈັນທີ 08 ເມສາຜ່ານມາ ໂດຍການເປັນປະທານຮ່ວມຂອງສະຫາຍ ຮສຈ. ປອ. ລິນຄຳ ດວງສະຫວັນ ເລຂາທິການສະພາແຫ່ງຊາດ ແລະ ສະຫາຍ ຫງວຽນ ບາ ຮຸ່ງ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ.ຫວຽດນາມ ປະຈຳ ສປປ ລາວ; ມີສະຫາຍ ນາງ ວັນດີ ບຸດທະສະວົງ ຮອງປະທານກຳມາທິການການຕ່າງປະເທດ ທັງເປັນຮອງຫົວໜ້າຄະນະຮັບຜິດຊອບຊຸດເຝິກອົບຮົມພາສາຫວຽດນາມ ຊຸດທີ II ໄລຍະ 2 ເດືອນ, ຄະນະຄູ-ອາຈານຈາກສະຖານທູດຫວຽດນາມ ພ້ອມດ້ວຍບັນດາສະຫາຍຄະນະກົມ, ຫົວໜ້າສູນ, ຫົວໜ້າຫ້ອງການ, ຄະນະພະແນກ ແລະ ນັກສຶກສາຊຸດເຝິກອົບຮົມດັ່ງກ່າວ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ໄດ້ຮັບຟັງການຜ່ານບົດສະຫຼຸບການຮຽນ-ການ

ອ່ານຕໍ່ໜ້າ 8



ສິ່ງທີ່ຄວນປະຕິບັດ... (ໜ້າ 9)


ມົນລະພິດ... (ໜ້າ 10)


ອະດີດນາຍົກ... (ໜ້າ 10)



ຄວາມຕ້ອງການ... (ໜ້າ 12)

# ຮອງປະທານ ສພຊ ຕິດຕາມກວດກາ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ



(ສພຊ) - ກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານຢູ່ແຂວງວຽງຈັນ ໄດ້ຈັດຂຶ້ນໃນວັນທີ 05 ເມສາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ພາຍໃຕ້ການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີຮອງປະທານສະພາແຫ່ງຊາດ ໂດຍມີທ່ານ ພົຕ. ປອ. ວົງສັກ ພັນທະວົງ ປະທານກຳມາທິການ ປກຊ-ປກສ, ທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງພ້ອມດ້ວຍບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທັງນີ້, ກໍເພື່ອຕິດຕາມການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ສະບັບປັບ ປຸງປີ 2021 ທັງເປັນການເພີ່ມທະວີການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແນໃສ່ຮັບປະກັນເຮັດໃຫ້ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໄດ້ຮັບການປະຕິບັດຢ່າງເຂັ້ມງວດ, ຄົບຖ້ວນ, ຖືກຕ້ອງຕາມຄຳຕັດສິນ ແລະ ກົດໝາຍທີ່ກຳນົດໄວ້ແລະເພື່ອເປັນຂໍ້ມູນພື້ນຖານກະກຽມລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ກໍຄືກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ແລະ ເປັນບ່ອນອີງໃນການປຶກສາຫາລື ແລະ ສະເໜີພາກສ່ວນກ່ຽວຂ້ອງຄົ້ນຄວ້າມາດຕະການແກ້ໄຂ.

ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ມີຄຳເຫັນວ່າ: ຈຸດປະສົງຕົ້ນຕໍໃນການຈັດກອງປະຊຸມມື້ນີ້ ເພື່ອຮັບຟັງການລາຍງານຂອງຂະແໜງການແລະອົງການທີ່ກ່ຽວຂ້ອງກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ໄດ້ປະກາດໃຊ້ໃນປີ 2021 ແລະສະພາບການຈັດຕັ້ງປະຕິບັດຄຳຕັດສິນຂອງສານຢູ່ແຂວງວຽງຈັນ; ພ້ອມທັງຮ່ວມກັນປະກອບຄຳຄິດເຫັນກ່ຽວກັບວຽກງານດັ່ງກ່າວເພື່ອຊອກໃຫ້ເຫັນຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ, ສາເຫດທີ່ພາໃຫ້ບໍ່ສາມາດຈັດຕັ້ງປະຕິບັດໄດ້, ສິ່ງທີ່ເປັນບັນຫາທ້າທາຍຕ່າງໆ ແລະ ທິດທາງແກ້ໄຂໃນຕໍ່ໜ້າ ແນໃສ່ສ້າງຄວາມເປັນເອກະພາບສູງໃນການຈັດຕັ້ງປະຕິບັດ ເຮັດໃຫ້ທົ່ວສັງຄົມມີສະຕິເຄົາລົບ ແລະ ປະຕິບັດກົດໝາຍໃຫ້ສູງຂຶ້ນກວ່າເກົ່າ, ຮັບປະກັນຄວາມເປັນທຳໃນທົ່ວສັງຄົມ, ຍົກສູງຄຸນນະພາບໃນການດຳເນີນຄະດີຕາມຂະບວນຍຸຕິທຳ ໃຫ້ມີຄວາມສັກສິດ ແລະ ເຂັ້ມງວດຂຶ້ນກວ່າເກົ່າ. ທ່ານຮອງປະທານສະພາແຫ່ງຊາດກ່າວເພີ່ມອີກວ່າ: ການຈັດຕັ້ງປະຕິບັດຕັດສິນຂອງສານນັ້ນແມ່ນມີຄວາມສຳຄັນ, ເປັນຂອດສຸດທ້າຍຂອງຂະບວນຍຸຕິທຳ; ສະນັ້ນ, ຈຶ່ງຢາກຮຽກຮ້ອງມາຍັງບັນດາທ່ານຈົ່ງຍົກສູງຄວາມຮັບຜິດຊອບຄົ້ນຄວ້າປະກອບຄຳຄິດເຫັນໃສ່ເນື້ອໃນຕ່າງໆ ເພື່ອເຮັດໃຫ້ເນື້ອໃນກອງປະຊຸມຄັ້ງນີ້ມີຄວາມສົມບູນ ແລະ ບັນລຸຜົນສຳເລັດຕາມຈຸດປະສົງທີ່ວາງໄວ້.

ໃນກອງປະຊຸມຄັ້ງນີ້ໄດ້ຮັບຟັງການລາຍງານຂອງພະແນກຍຸຕິທຳແຂວງ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ໄດ້ປະກາດໃຊ້ໃນປີ 2021 ແລະ ສະພາບການຈັດຕັ້ງປະຕິບັດຄຳຕັດສິນຂອງສານຢູ່ແຂວງວຽງຈັນ; ການລາຍງານສະພາບການຈັດຕັ້ງປະຕິບັດດຳລັດຂອງລັດຖະບານ ວ່າດ້ວຍຊັບສິນທີ່ຖືກຢຶດ, ອາຍັດ ແລະ ຮິບເປັນຂອງລັດ ສະບັບເລກທີ 280/ນຍ, ລົງວັນທີ 09/8/2022 ຈາກກອງບັນຊາການ ປກສ ແຂວງ ແລະ ຮັບຟັງການປະກອບຄຳຄິດເຫັນຂອງທ່ານຮອງເຈົ້າແຂວງ, ປະທານສະພາປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ ແລະ ຈາກພາກສ່ວນກ່ຽວຂ້ອງອີກຈຳນວນໜຶ່ງ.

**(ນາງ ກົງໃຈ ແສງອຳພັນ)**

# ຄົ້ນຄວ້າ ແລະ ປະກອບຄຳເຫັນ ຕໍ່ຮ່າງກົດໝາຍການສົ່ງເສີມການລົງທຶນ



(ສພຊ) - ວັນທີ 08 ເມສາ 2024 ທີ່ສະພາແຫ່ງຊາດ (ສພຊ) ໄດ້ຈັດກອງປະຊຸມຮ່ວມລະຫວ່າງກຳມາທິການກ່ຽວຂ້ອງຂອງສະພາແຫ່ງຊາດ ແລະ ລັດຖະບານ ເພື່ອປຶກສາຫາລືກ່ຽວກັບຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ຕິດພັນກັບການຄຸ້ມຄອງເຂດເສດຖະກິດພິເສດເພື່ອກຽມສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX ໂດຍການເປັນປະທານກອງປະຊຸມຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ; ມີບັນດາກຳມາທິການພາຍໃນ ສພຊ, ສະພາປະຊາຊົນຂັ້ນແຂວງໃນຂອບເຂດທົ່ວປະເທດ, ບັນດາກະຊວງ-ອົງການ, ຄະນະກົມ, ຄະນະພະແນກ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງຈຳນວນໜຶ່ງ ເຂົ້າຮ່ວມປະຊຸມເຊິ່ງໜ້າ ແລະ ຜ່ານລະບົບທາງໄກ ທັງໝົດ 80 ທ່ານ.

ທັງນີ້, ເພື່ອຮັບປະກັນທາງດ້ານເນື້ອໃນຂອງຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ທີ່ຕິດພັນກັບການຄຸ້ມຄອງເສດຖະກິດພິເສດ ໃຫ້ມີການຄົ້ນຄວ້າທີ່ເລິກເຊິ່ງ, ຈະແຈ້ງ, ສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍອື່ນ, ສົນທິສັນຍາສາກົນທີ່ສປປລາວເປັນພາຄີ ແລະ ແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ເພື່ອເປັນການລະດົມສະຕິປັນຍາຈາກທຸກພາກສ່ວນທີ່ກ່ຽວຂ້ອງກັບການສ້າງ ແລະ ປັບປຸງກົດໝາຍ ກ່ອນນຳສະເໜີກອງປະຊຸມຄະນະປະຈຳສະພາແຫ່ງຊາດຕົກລົງນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX.

ໃນກອງປະຊຸມ, ໄດ້ຮັບຟັງການລາຍງານກ່ຽວກັບການກະກຽມຄວາມພ້ອມຂອງຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ຕິດພັນກັບການຄຸ້ມຄອງເສດຖະກິດພິເສດ ຈາກທ່ານ ສະຖາບັນດິດ ອິນສີຊຽງໃໝ່ ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າ, ສົນທະນາແລກປ່ຽນ, ປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມ ແລະ ກົງໄປກົງມາ.

**(ນາງ ສຸພາວັນ ທອມສະນິດ)**



# ສຳເລັດການທາບທາມຮ່າງກົດໝາຍ 3 ສະບັບ ຂົງເຂດສະພາແຫ່ງຊາດຢູ່ແຂວງອຸດົມໄຊ



(ສພຊ) - ກອງປະຊຸມທາບທາມຮ່າງກົດໝາຍ 3 ສະບັບ ໄດ້ຈັດຂຶ້ນລະຫວ່າງວັນທີ 04-05 ເມສາ 2024 ທີ່ແຂວງອຸດົມໄຊ ໂດຍການເປັນປະທານຮ່ວມຂອງທ່ານ ຣສ. ປອ. ລິນຄຳດວງສະຫວັນກຳມະການສຳຮອງສູນກາງພັກ, ກຳມະການຄະນະປະຈຳ, ເລຂາທິການສະພາແຫ່ງຊາດ ແລະ ທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 4, ປະທານສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ; ມີທ່ານຮອງເລຂາທິການສະພາແຫ່ງຊາດ, ທ່ານຮອງເຈົ້າແຂວງ, ທ່ານຮອງປະທານ ສພຂ, ບັນດາທ່ານ ສສຊ ປະຈຳເຂດ ເລືອກຕັ້ງທີ 4, ທ່ານເຈົ້າເມືອງໄຊ, ບັນດາທ່ານປະທານຄະນະກຳມະການ ແລະເລຂາທິການ ສພຂ, ບັນດາທ່ານຫົວໜ້າ-ຮອງຫົວໜ້າພະແນກການ ແລະ ອົງການອ້ອມຂ້າງແຂວງ, ອະດີດການນຳອາວຸໂສບຳນານ, ກອງເລຂາຊ່ວຍວຽກຈາກສູນກາງ ແລະ ທ້ອງຖິ່ນເຂົ້າຮ່ວມລວມທັງໝົດ 86 ທ່ານ, ຍິງ 28 ທ່ານ.

ບັນດາທ່ານຜູ້ແທນກອງປະຊຸມໄດ້ເປັນເຈົ້າການຄົ້ນຄວ້າ ແລະປະກອບຄຳເຫັນໃສ່ແຕ່ລະຮ່າງກົດໝາຍຢ່າງມີຈຸດສຸມ, ກົງໄປກົງມາຕາມຄຳຖາມເຈາະຈົ້ມ ແລະ ບາງບັນຫາປີ່ນອ້ອມ ໂດຍໄດ້ຍົກໃຫ້ເຫັນການຈັດຕັ້ງປະຕິບັດຕົວຈິງ; ພ້ອມກັນນັ້ນ, ກໍມີຂໍ້ສະເໜີໃຫ້ຄະນະຮັບຜິດຊອບນຳໄປຄົ້ນຄວ້າ, ພິຈາລະນາ ແລະ ປັບປຸງກົດໝາຍ 3 ສະບັບດັ່ງກ່າວໃຫ້ສອດຄ່ອງກັບເງື່ອນໄຂການຂະຫຍາຍຕົວຂອງເສດຖະກິດ-ສັງຄົມແລະສະພາບຕົວຈິງຂອງປະເທດເຮົາເຊິ່ງຜູ້ເຂົ້າຮ່ວມໄດ້ປະກອບຄຳເຫັນໃສ່ 3 ຮ່າງກົດໝາຍ ທັງໝົດ 47 ເທື່ອທ່ານ ຍິງ 17 ເທື່ອທ່ານ ໃນນັ້ນ, ຮ່າງກົດໝາຍວ່າດ້ວຍສະພາແຫ່ງຊາດ 14 ເທື່ອທ່ານ ຍິງ 4 ເທື່ອທ່ານ ຕໍ່ 12 ມາດຕາ, ຮ່າງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ 21 ເທື່ອທ່ານ ຍິງ 9 ເທື່ອທ່ານ ຕໍ່ 17 ມາດຕາ ແລະ ຮ່າງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ 12 ເທື່ອທ່ານ ຍິງ 4 ເທື່ອທ່ານ ຕໍ່ 13 ມາດຕາ. ຕອນທ້າຍກອງປະຊຸມ, ທ່ານ ຣສ. ປອ. ລິນຄຳ ດວງສະ ຫວັນ ໄດ້ມອບຄອມພິວເຕີຕັ້ງໂຕະ 2 ຊຸດ ໃຫ້ສະພາປະຊາຊົນແຂວງອຸດົມໄຊ ເພື່ອໝູນໃຊ້ເຂົ້າໃນວຽກງານ ໃຫ້ມີປະສິດທິຜົນຍິ່ງໆຂຶ້ນໄປ.

ໃນໂອກາດດຽວກັນນີ້, ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ພ້ອມດ້ວຍຄະນະ ໄດ້ເຂົ້າພົບທ່ານ ປອ. ບຸນຄົງ ຫຼ້າຈຽມພອນ ກຳມະການສຳຮອງສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວງໆອຸດົມໄຊເພື່ອແຈ້ງຈຸດປະສົງຂອງການລົງມາເຄື່ອນໄຫວວຽກງານໃນຄັ້ງນີ້ ແລະ ໄດ້ຮັບຟັງການລາຍງານໂດຍຫຍໍ້ສະພາບການພັດທະນາເສດຖະກິດ-ສັງຄົມຂອງແຂວງ.

## ກອງທຶນຊ່ວຍເຫຼືອສັງຄົມມອບເສື້ອໃຫ້ສະພາແຫ່ງຊາດ




(ສພຊ)- ວັນທີ 9 ເມສາ 2024, ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮອບ ເສື້ອຈາກກອງທຶນຊ່ວຍເຫຼືອສັງຄົມສະພາແຫ່ງຊາດ ໃຫ້ແກ່ຄະນະເລຂາທິການສະພາແຫ່ງຊາດເນື່ອງໃນໂອກາດປີໃໝ່ລາວພສ2567; ຕ່າງໜ້າມອບໂດຍທ່ານ ນາງ ມະນີວັນ ເຢຍປາວເຣີ ຮອງປະທານກອງທຶນຊ່ວຍເຫຼືອສັງຄົມສະພາແຫ່ງຊາດ ແລະ ຮັບໂດຍ ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ເລຂາທິການສະພາແຫ່ງຊາດ ເຄື່ອງທີ່ນຳມາມອບໃນຄັ້ງນີ້ມີ: ເສື້ອປີໃໝ່ລາວ ຈຳນວນ 485 ຜືນ ມູນຄ່າ31,525,000ກີບເພື່ອມອບໃຫ້ແກ່ການນຳ ແລະ ພະນັກງານພາຍໃນສະພາແຫ່ງຊາດ.

ໂອກາດດັ່ງກ່າວ, ທ່ານເລຂາທິການສະພາແຫ່ງຊາດ ໄດ້ອວຍພອນໃຫ້ຄະນະນຳແລະພະນັກງານກອງທຶນເນື່ອງໃນໂອກາດປີໃໝ່ລາວ ແລະ ໄດ້ມອບໃບຍ້ອງຍໍ ເພື່ອເປັນການຂອບໃຈ ແລະຮູ້ບຸນຄຸນຕໍ່ຄະນະກອງທຶນຊ່ວຍເຫຼືອສັງຄົມສະພາແຫ່ງຊາດ ເຊິ່ງໃນໄລຍະຜ່ານມາກອງທຶນຊ່ວຍເຫຼືອສັງຄົມກໍໄດ້ໃຫ້ການອຸປະຖຳຊ່ວຍເຫຼືອ ສະພາແຫ່ງຊາດເຂົ້າໃນການງານສຳຄັນຕ່າງໆ ຂອງສະພາແຫ່ງຊາດເປັນເຈົ້າພາບຈັດຂຶ້ນ ແລະ ຫວັງວ່າກອງທຶນຊ່ວຍເຫຼືອສັງຄົມສືບຕໍ່ອຸປະຖຳຊ່ວຍເຫຼືອສະພາແຫ່ງຊາດກໍຄືຊ່ວຍເຫຼືອສັງຄົມສືບຕໍ່ໄປ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

## ຄະນະປະຈຳສະພາແຫ່ງຊາດ ຕິດຕາມກວດກາ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານຢູ່ແຂວງຄຳມ່ວນ




(ສພຊ) - ເພື່ອປະຕິບັດຕາມພາລະບົດບາດຂອງສະພາແຫ່ງຊາດ (ສພຊ) ໃນການຕິດຕາມກວດກາ; ເພື່ອຕິດຕາມການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ສະບັບປັບປຸງປີ 2021 ແນໃສ່ຮັບປະກັນເຮັດໃຫ້ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໄດ້ຮັບການປະຕິບັດຢ່າງເຂັ້ມງວດ, ຄົບຖ້ວນ, ຖືກຕ້ອງຕາມກົດໝາຍທີ່ກຳນົດໄວ້ ແລະ ເພື່ອເປັນຂໍ້ມູນພື້ນຖານກະກຽມລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ກໍຄືກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX ທັງເປັນບ່ອນອີງໃນການປຶກສາຫາລື ແລະ ສະເໜີພາກສ່ວນກ່ຽວຂ້ອງ ຄົ້ນຄວ້າມາດຕະການແກ້ໄຂ. ວັນທີ 10 ເມສາ 2024 ທີ່ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ຈັດກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໂດຍການເປັນປະທານຮ່ວມຂອງທ່ານ ພົຕ. ວິງສັກ ພັນທະວົງ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນ; ມີທ່ານຮອງປະທານ ສພຂ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12, ຕາງໜ້າຈາກສານປະຊາຊົນແຂວງ, ໄອຍະການປະຊາຊົນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ບັນດາພະແນກການ ແລະ ອົງການທີ່ກ່ຽວຂ້ອງຂອງແຂວງດັ່ງກ່າວເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານຂອງພະແນກຍຸຕິທຳແຂວງ ກ່ຽວກັບການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານສະບັບປັບປຸງປີ2021 ແລະ ສະພາບການຈັດຕັ້ງປະຕິບັດວຽກງານປະຕິບັດຄຳຕັດສິນຂອງສານແຕ່ລະຂັ້ນ; ການລາຍງານກ່ຽວກັບສະພາບການຈັດຕັ້ງປະຕິບັດດຳລັດຂອງລັດຖະບານວ່າດ້ວຍຊັບສິນທີ່ຖືກຢຶດ, ອາຍັດ ແລະ ຮິບເປັນຂອງລັດ ສະບັບເລກທີ 280/ນຍ, ລົງວັນທີ 09/8/2022 ຈາກບັນດາພະແນກການກ່ຽວຂ້ອງຂອງແຂວງ ເຊິ່ງບັນດາທ່ານຜູ້ເຂົ້າຮ່ວມກອງປະຊຸມໄດ້ຍົກໃຫ້ເຫັນຂໍ້ສະດວກ, ດ້ານດີ, ຂໍ້ຫຍຸ້ງຍາກ, ດ້ານຄົງຄ້າງ, ສາເຫດທີ່ພາໃຫ້ມີການແກ່ຍາວ, ບໍ່ສາມາດຈັດຕັ້ງປະຕິບັດໄດ້, ສິ່ງທ້າທາຍຕ່າງໆ, ບາງບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງແກ້ໄຂວຽກງານດັ່ງກ່າວໃນຕໍ່ໜ້າ. ຈາກນັ້ນ, ບັນດາທ່ານຜູ້ເຂົ້າຮ່ວມ ໄດ້ປະກອບຄຳຄິດຄຳເຫັນຕາມຄຳເຈາະຈີ້ມຂອງປະທານກອງປະຊຸມ ແລະ ຮັບຟັງຄຳຊີ້ແຈງຈາກຕາງໜ້າພະແນກຍຸຕິທຳແຂວງ, ກອງບັນຊາການ ປກສ ແຂວງ ແລະ ຮັບຟັງການໂອ້ລົມຊີ້ນຳຕໍ່ກອງປະຊຸມຈາກທ່ານ ພົຕ. ວິງສັກ ພັນທະວົງ.

**(ນາງ ກຸກກິກ ບຸດດາໄຊ)**



## ກວດກາເນື້ອໃນຮອບດ້ານຮ່າງກົດໝາຍ ການສະກັດກັ້ນ ແລະ ຕ້ານອັກຄີໄພ




(ສພຊ) - ເພື່ອຮັບປະກັນທາງດ້ານເນື້ອໃນຂອງຮ່າງກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ (ສະບັບປັບປຸງ) ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ໃຫ້ມີການຄົ້ນຄວ້າທີ່ເລິກເຊິ່ງ, ຈະແຈ້ງ, ສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍອື່ນ, ສົນທິສັນຍາສາກົນທີ່ ສປປລາວ ເປັນພາຄີ ແລະ ແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ທັງເປັນການລະດົມສະຕິປັນຍາຈາກທຸກພາກສ່ວນທີ່ກ່ຽວຂ້ອງກັບການສ້າງແລະປັບປຸງກົດໝາຍກ່ອນນຳສະເໜີກອງປະຊຸມຄະນະປະຈຳສະພາແຫ່ງຊາດ(ຄປຈສພຊ) ຕົກລົງນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX. ລະຫວ່າງວັນທີ 05-06 ເມສາ 2024 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໄດ້ມີກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ (ສະບັບປັບປຸງ) ໂດຍການເປັນປະທານຮ່ວມຂອງທ່ານ ປອ. ພູທອນ ວໍລະເພັດ ຮອງປະທານກຳມາທິການກົດໝາຍ, ທ່ານ ພຈອ. ມາລາ ວິລະຈິດ ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ທ່ານ ພົຕ. ສີມວັນ ສາຍລ້ອງພາ ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ (ປກສ); ເຂົ້າຮ່ວມມີບັນດາທ່ານຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄປຈສພຊ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກົມຕຳຫຼວດສະກັດກັ້ນແລະຕ້ານອັກຄີໄພພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະ ພະນັກງານ-ລັດຖະກອນຈາກພາກສ່ວນທີ່ກ່ຽວຂ້ອງຈຳນວນໜຶ່ງ.

ທ່ານ ປອ. ພູທອນ ວໍລະເພັດ ໄດ້ມີຄຳເຫັນກ່າວເປີດວ່າ: ກອງປະຊຸມຄັ້ງນີ້ ເປັນຂັ້ນຕອນໜຶ່ງຕາມທີ່ກົດໝາຍວ່າດ້ວຍການສ້າງນິຕິກຳໄດ້ກຳນົດໄວ້ ເພື່ອກວດກາເນື້ອໃນລະອຽດ, ຮອບດ້ານ ກ່ອນນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX. ເພື່ອຮັບປະກັນໃຫ້ກອງປະຊຸມໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະເປົ້າໝາຍ ຮຽກຮ້ອງມາຍັງບັນດາທ່ານທີ່ເຂົ້າຮ່ວມ ຈົ່ງພ້ອມກັນຄົ້ນຄວ້າ ແລະ ປະກອບຄຳເຫັນຢ່າງກົງໄປກົງມາ, ບັນຫາໃດທີ່ກອງປະຊຸມຍົກຂຶ້ນ ເຊິ່ງກ່ຽວຂ້ອງທາງດ້ານວິຊາການກໍໃຫ້ຄະນະຮັບຜິດຊອບປັບປຸງຮ່າງກົດໝາຍ ກໍຄືກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການອະທິບາຍ, ໃຫ້ຄວາມກະຈ່າງແຈ້ງຕື່ມ ແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍ ມີຄວາມຄົບຖ້ວນ ແລະ ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍອື່ນທີ່ປະກາດໃຊ້ແລ້ວ, ສົນທິສັນຍາ, ສັນຍາສາກົນທີ່ກ່ຽວຂ້ອງ. ພ້ອມກັນນີ້, ກໍສະເໜີໃຫ້ກອງປະຊຸມພິຈາລະນາຮ່າງກົດໝາຍຢ່າງຮອບດ້ານ ໂດຍສະເພາະເນື້ອໃນມາດຕາທີ່ໄດ້ປັບປຸງ; ບັນຫາທີ່ຜູ້ເຂົ້າຮ່ວມຍົກຂຶ້ນມາ ໃຫ້ພ້ອມກັນຄົ້ນຄວ້າ, ສົນທະນາຢ່າງກົງໄປກົງມາ; ບັນຫາໃດຕິດພັນດ້ານວິຊາການໃຫ້ຄະນະຮັບຜິດຊອບອະທິບາຍ, ໃຫ້ຄວາມກະຈ່າງແຈ້ງຕື່ມ; ບັນຫາໃດທີ່ມີຄຳເຫັນບໍ່ເປັນເອກະພາບກັນ ຈະໄດ້ນຳເຂົ້າລາຍງານຂໍຄຳເຫັນຢູ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນາ; ພາຍຫຼັງສຳເລັດກອງປະຊຸມມອບໃຫ້ກົມກົດໝາຍຂອງສະພາແຫ່ງຊາດກະກຽມບົດລາຍງານ ແລະ ບົດບັນທຶກລະອຽດ ເພື່ອລາຍຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນເມສານີ້.

ໃນກອງປະຊຸມ, ໄດ້ຮັບຟັງການສະເໜີຫຍໍ້ກ່ຽວກັບເນື້ອໃນບາງມາດຕາທີ່ໄດ້ປັບປຸງ ຈາກທ່ານຮອງລັດຖະມົນຕີກະຊວງ ປກສ ແລະ ເນື້ອໃນກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ (ສະບັບປັບປຸງ) ຈາກທ່ານຫົວໜ້າກົມກົດໝາຍ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າ, ສົນທະນາແລກປ່ຽນ, ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ແລະ ມີຈຸດສຸມ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ສຸພາວັນ ທອມສະນິດ)**

## ກອງທຶນຊ່ວຍເຫຼືອສັງຄົມ ປຶກສາຫາລືຫຼາຍວຽກງານສຳຄັນ



(ສພຊ) - ວັນທີ 08 ເມສາ 2024 ທີ່ສະພາແຫ່ງຊາດ, ກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ໄດ້ຈັດກອງປະຊຸມປຶກສາຫາລືວຽກງານປິ່ນອ້ອມໃນໄລຍະຜ່ານມາ ແລະ ວາງທິດທາງແຜນການເຄື່ອນໄຫວວຽກງານ ໃນຕໍ່ໜ້າຂອງກອງທຶນ, ໂດຍການເປັນປະທານຂອງທ່ານ ດຣ. ນາງ ວິພາວັນ ພົມວິຫານປະທານກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ; ມີຄະນະກອງທຶນ, ກອງເລຂາກອງທຶນພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການຜ່ານບົດສະຫຼຸບການເຄື່ອນໄຫວວຽກງານໃນໄລຍະຜ່ານມາ ແລະ ວາງທິດທາງ ແຜນການເຄື່ອນໄຫວວຽກງານໃນຕໍ່ໜ້າຂອງກອງທຶນ ພ້ອມທັງປຶກສາຫາລືຫຼາຍບັນຫາສຳຄັນ; ຫຼັງຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ປະກອບຄຳຄິດຄຳເຫັນໃສ່ບັນດາໜ້າວຽກຕ່າງໆ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານກອງທຶນດັ່ງກ່າວມີປະສິດທິພາບ, ປະສິດທິຜົນ ແລະເກີດປະໂຫຍດສູງສຸດຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

## ຄະນະຜູ້ແທນສະພາແຫ່ງຊາດລາວ ເຂົ້າຮ່ວມສຳມະນາການບໍລິຫານການປົກຄອງທີ່ດີຂອງລັດຖະສະພາ



(ສພຊ) - ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ອຳໄພ ຈິດມານິນ ຮອງປະທານກຳມາທິການກົດໝາຍ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມສຳມະນາກ່ຽວກັບການບໍລິຫານການປົກຄອງທີ່ດີຂອງລັດຖະສະພາເຊິ່ງໄດ້ຈັດຂຶ້ນໃນລະຫວ່າງວັນທີ 03-05 ເມສາ 2024 ທີ່ບາງກອກ, ລາຊະອານາຈັກໄທ ໂດຍມີຕົວແທນຈາກບັນດາປະເທດສະມາຊິກລັດຖະສະພາໃນພາກພື້ນອາຊຽນ ແລະ ພາກພື້ນອື່ນ.

ຈຸດປະສົງກອງປະຊຸມສຳມະນາຄັ້ງນີ້ເປັນເວທີແລກປ່ຽນຄຳຄິດຄຳເຫັນ ແລະ ບົດຮຽນເຊິ່ງກັນ ແລະກັນ ກ່ຽວກັບການບໍລິຫານ ແລະການປົກຄອງຂອງແຕ່ລະລັດຖະສະພາໃນພາກພື້ນອາຊຽນ ແລະພາກພື້ນອື່ນ; ພ້ອມດຽວກັນນັ້ນ, ກໍເປັນໂອກາດອັນດີທີ່ບັນດາສະມາຊິກລັດຖະສະພາທີ່ເຂົ້າຮ່ວມ ໄດ້ປຶກສາຫາລືກ່ຽວກັບຜົນປະໂຫຍດແລະແນວທາງທີ່ກ່ຽວຂ້ອງກັບການຮ່າງ ແລະ ການຈັດຕັ້ງປະຕິບັດລະບຽບການ, ພາລະບົດບາດ, ສິດ ແລະໜ້າທີ່ຄວາມຮັບຜິຊອບໃນລັດຖະສະພາຂອງຕົນ ໂດຍສະເພາະເຄື່ອງມືຕ່າງໆທີ່ນຳໃຊ້ເຂົ້າໃນການບໍລິຫານການປົກຄອງ ເພື່ອສະແດງໃຫ້ເຫັນເຖິງຄວາມໂປ່ງໃສໃນການປົກຄອງ ເຊິ່ງຄະນະຜູ້ແທນລາວກໍໄດ້ມີການຄົ້ນຄວ້າ, ແລກປ່ຽນ ແລະ ປະກອບຄຳເຫັນຕໍ່ກອງປະຊຸມຢ່າງສ້າງສັນ ແລະກົງໄປກົງມາ.

## ກບຜ ຕິດຕາມກວດກາໂຄງການຈຸດສຸມວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ



(ສພຊ) - ລະຫວ່າງວັນທີ 01-07 ເມສາ 2024 ທ່ານນາງ ທັດສະດາພອນ ຈັນທະມາດ ຮອງປະທານກຳມາທິການບັນດາເຜົ່າ (ກບຜ) ພ້ອມດ້ວຍຄະນະຮ່ວມກັບສະພາປະຊາຊົນແຂວງ ໄດ້ລົງເຄື່ອນໄຫວຕິດຕາມກວດກາບັນດາໂຄງການຈຸດສຸມວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ທີ່ພົວພັນກັບການດຳລົງຊີວິດຂອງປະຊາຊົນບັນດາເຜົ່າຢູ່ແຂວງຜົ້ງສາລີ. ທັງນີ້, ກໍເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ ຂອງບັນດາຂະແໜງການ ແລະອົງການກ່ຽວຂ້ອງກັບກຳມາທິການບັນດາເຜົ່າ; ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ສ້າງບ້ານພັດທະນາ ຕິດພັນກັບວຽກງານ 3 ສ້າງ, ໂຄງການລົງທຶນ ແລະ ການພັດທະນາທີ່ມີຜົນກະທົບຕໍ່ປະຊາຊົນບັນດາເຜົ່າ ທັງເປັນການເກັບກຳຂໍ້ມູນຕົວຈິງຕາມຄຳຮ້ອງ, ຄຳສະເໜີຂອງປະຊາຊົນ.

ໃນໂອກາດດັ່ງກ່າວ, ຄະນະໄດ້ເຂົ້າຢ້ຽມຂໍ່ານັບການນຳຂອງແຂວງ, ເຮັດວຽກກັບສະພາປະຊາຊົນແຂວງ, ຮັບຟັງການລາຍງານຫຍໍ້ຈາກບັນດາພະແນກການຂອງແຂວງ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ວຽກງານແນວລາວສ້າງຊາດ, ວຽກງານອົງການຈັດຕັ້ງມະຫາຊົນ, ວຽກງານພາຍໃນ, ວຽກງານປ້ອງກັນຄວາມສະຫງົບ, ການລົງທຶນຂອງທະນາຄານນະໂຍບາຍຂອງແຂວງ ແລະ ອື່ນໆ. ພ້ອມດຽວກັນນັ້ນ, ທ່ານຮອງປະທານ ກບຜ ກໍໄດ້ເນັ້ນໃຫ້ເອົາໃຈໃສ່ຕື່ມບາງບັນຫາເຊັ່ນ: ການຈັດຕັ້ງປະຕິບັດວຽກງານພັດທະພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ທີ່ນອນໃນຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 72/ນຍ, ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 82/ສພຊ, ດຳລັດ 348/ລບ ແລະ ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ສະບັບເລກທີ 45/ສພຊ, ວຽກງານຕໍ່ຕ້ານ ແລະ ສະກັດກັ້ນຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ, ວຽກງານພາຍໃນຕາມດຳລັດ 315/ລບ, ການຄຸ້ມຄອງການເຂົ້າ-ອອກຂອງພົນລະເມືອງ, ການຄຸ້ມຄອງໂຄງການຊ່ວຍເຫຼືອລ້າ, ການຄຸ້ມຄອງຄົນຕ່າງດ້າວ ແລະ ບັນຫາແຮງງານເຄື່ອນຍ້າຍ ແລະທຸກທີ່ວຂໍ້ທີ່ນອນໃນມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບ 118/ສພຊ.

ຈາກນັ້ນ, ຄະນະຍັງໄດ້ລົງເຄື່ອນໄຫວພົບປະປະຊາຊົນ ແລະເຮັດວຽກຢູ່ຈຸດສຸມກຸງລຸກ, ຈຸດສຸມກິວແກ່ຣ, ບ້ານອິມພຣູ ເມືອງໃໝ່ ແລະ ຈຸດສຸມແສນລາດ, ຈຸດສຸມບ້ານຢາງເຕີຍ, ບ້ານວຽງຄຳ ເມືອງຂວາ ແລະ ໄດ້ມອບເຄື່ອງນຸ່ງຫົ່ມຈຳນວນໜຶ່ງອີກດ້ວຍ.

## ອົບຮົມເປັນຄູເຝິກການນຳໃຊ້ລະບົບເຄືອຂ່າຍພາຍໃນ



(ສພຊ) - ເພື່ອຈັດຕັ້ງຜັນຂະຫຍາຍແຜນພັດທະນາການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ແລະ ພະນັກງານທີ່ເປັນເສນາທິການ ໄລຍະ 5 ປີ (2021-2025) ໃຫ້ເປັນຮູບປະທຳໃນວຽກງານຕົວຈິງ; ເພື່ອປັບປຸງການສະໜອງຂໍ້ມູນ-ຂ່າວສານຜ່ານລະບົບເຄືອຂ່າຍພາຍໃນ ຮັບໃຊ້ໃຫ້ແກ່ການຄົ້ນຄວ້າ, ຕົກລົງບັນຫາຕ່າງໆ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາ ທັງຢູ່ສູນກາງ ແລະ ທ້ອງຖິ່ນໃນຂອບເຂດທົ່ວປະເທດ; ເພື່ອເຝິກອົບຮົມວິທີນຳໃຊ້ລະບົບເຄືອຂ່າຍພາຍໃນໃຫ້ແກ່ພະນັກງານສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ໃຫ້ກາຍເປັນຄູເຝິກທີ່ສາມາດເຜີຍແຜ່, ແນະນຳວິທີນຳໃຊ້ລະບົບເຄືອຂ່າຍພາຍໃນ ໃຫ້ແກ່ເປົ້າໝາຍຕ່າງໆຂອງການຈັດຕັ້ງ, ທ້ອງຖິ່ນຮາກຂອງຕົນ ທັງປະກອບສ່ວນປັບປຸງເນື້ອໃນ ແລະ ບຳລຸງຮັກສາລະບົບເຄືອຂ່າຍພາຍໃນໄດ້ເປັນຢ່າງດີ.

ກອງປະຊຸມເຝິກອົບຮົມການເປັນຄູເຝິກການນຳໃຊ້ລະບົບເຄືອຂ່າຍພາຍໃນຂອງສະພາແຫ່ງຊາດ ໃຫ້ແກ່ພະນັກງານສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ 7 ແຂວງຄື: ນະຄອນຫຼວງວຽງຈັນ, ຫົວພັນ, ຊຽງຂວາງ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ ແລະ ໄຊສົມບູນ ໄດ້ຈັດຂຶ້ນທີ່ເມືອງທ່າພະບາດ ແຂວງບໍລິຄຳໄຊ ໃນລະຫວ່າງວັນທີ 9-10 ເມສາ 2024 ພາຍໃຕ້ການເປັນປະທານຂອງທ່ານ ສິນທະລາ ຫຼ້າສຸກສະໄໝ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ; ມີທ່ານ ຄຳແທ່ນ ວິລະກຸນ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ, ບັນດາທ່ານເລຂາທິການ-ຮອງເລຂາທິການສະພາປະຊາຊົນຂັ້ນແຂວງ, ຫົວໜ້າ-ຮອງຫົວໜ້າສູນ, ຄະນະພະແນກ ແລະ ລັດຖະກອນວິຊາການພາຍໃນສະຖາບັນດັ່ງກ່າວ ພ້ອມດ້ວຍສຳມະນາກອນຈາກບັນດາກົມ-ສູນພາຍໃນ ສພຊ ແລະ ສພຂ 7 ແຂວງ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການສະເໜີວິທີການສະໝັກການນຳໃຊ້ລະບົບເຄືອຂ່າຍພາຍໃນສະພາແຫ່ງຊາດ, ການເຂົ້າເຖິງ ແລະ ຊອກຫາເອກະສານ ແລະ ນິຕິກຳຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະບັນດາອົງການລັດ ໃນລະບົບເຄືອຂ່າຍພາຍໃນແລະການຄຸ້ມຄອງ, ປັບປຸງ ແລະ ບົວລະບັດຮັກສາລະບົບ; ພ້ອມດຽວກັນນີ້, ຜູ້ເຂົ້າຮ່ວມກໍໄດ້ແລກປ່ຽນຖາມ-ຕອບຢ່າງກົງໄປກົງມາ ທັງໄດ້ລົງທະບຽນສະໝັກເຂົ້ານຳໃຊ້ເຄືອຂ່າຍດັ່ງກ່າວ ແລະ ທົດລອງນຳໃຊ້ຕົວຈິງໃນການເຂົ້າລະບົບ ແລະ ຊອກຄົ້ນບັນດາເອກະສານທີ່ຕ້ອງການ, ວິທີບຳລຸງຮັກສາລະບົບດັ່ງກ່າວ ໃຫ້ມີຄວາມປອດໄພ ເພື່ອເຮັດໃຫ້ສາມາດເຂົ້າໃຈຢ່າງຈະແຈ້ງ ແລະ ສາມາດນຳໃຊ້ໄດ້ຢ່າງຄ່ອງຕົວ ເພື່ອຈະສືບຕໍ່ນຳເອົາບົດຮຽນໃນຄັ້ງນີ້ ໄປເຝິກຕໍ່ໃຫ້ແກ່ພະນັກງານ-ລັດຖະກອນໃນຂົງເຂດຂອງຕົນ ສາມາດຮັບປະກັນໃນການຄົ້ນຄວ້າ ແລະ ສະໜອງຂໍ້ມູນໃຫ້ມີຄວາມວ່ອງໄວ ແລະ ໄດ້ຮັບຂໍ້ມູນຖືກຕ້ອງ ໃຫ້ແກ່ ສສຊ ແລະ ສສຂ.

**(ນາງ ປາກາລັກ ພົມມີໄຊ)**

# ສຳເລັດກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານກົມເລຂານຸການ



(ສພຊ) - ໜ່ວຍຊາວໜຸ່ມຮາກຖານກົມເລຂານຸການ ດຳເນີນກອງປະຊຸມໃຫຍ່ຄັ້ງທີ II ໃນວັນທີ 11 ເມສາ 2024 ທີ່ສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຮ່ວມຂອງສະຫາຍ ສິງຄຳ ວົງພະຈັນ ຮອງເລຂາຄະນະພັກຮາກຖານຄະນະເລຂາທິການສະພາແຫ່ງຊາດ, ສະຫາຍ ເປຄຳ ລໍຄຳສອນ ຮອງເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ແລະ ສະຫາຍ ສຸລະສັກ ສຸວັນນະວົງ ເລຂາໜ່ວຍຊາວໜຸ່ມຮາກຖານກົມເລຂານຸການ; ມີບັນດາສະຫາຍຕາງໜ້າໜ່ວຍຊາວໜຸ່ມຮາກຖານພາຍໃນ ສພຊ ພ້ອມດ້ວຍສະມາຊິກຊາວໜຸ່ມພາຍໃນໜ່ວຍຮາກຖານດັ່ງກ່າວ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານບົດສຳຫຼວດການນຳພາ ແລະ ພ້ອມກັນສະຫຼຸບຕີລາຄາ, ພິຈາລະນາແລະຮັບຮອງເອົາບົດລາຍງານການເມືອງຂອງໜ່ວຍຊາວໜຸ່ມຮາກຖານກົມເລຂານຸການ ເຊິ່ງໄດ້ຖືເອົາວຽກງານສຶກສາອົບຮົມການເມືອງ-ແນວຄິດ ເປັນວຽກງານໜຶ່ງທີ່ສຳຄັນ ໂດຍໄດ້ນຳພາຈັດຕັ້ງເຜີຍແຜ່ເຊື່ອມຊຶມ, ຊຸກຍູ້ສະມາຊິກຊາວໜຸ່ມ ເຂົ້າຮ່ວມຮັບຟັງການເຜີຍແຜ່ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ມະຕິ, ຄຳສັ່ງ, ລະບຽບກົດໝາຍຂອງລັດ ແລະ ວັນສຳຄັນຕ່າງໆຂອງພັກ-ຂອງຊາດ ໃນແຕ່ລະໄລຍະຢ່າງເປັນປົກກະຕິ; ເອົາໃຈໃສ່ຢ່າງຕັ້ງໜ້າໃນການກໍ່ສ້າງສະມາຊິກຊາວໜຸ່ມທາງດ້ານການເມືອງ-ແນວຄິດ ແລະ ການຈັດຕັ້ງ, ປັບປຸງແບບແຜນວິທີເຮັດວຽກຕິດພັນກັບວຽກງານຕົວຈິງ, ຮ່ວມຊີວິດການເມືອງເປັນປະຈຳ ແລະ ເຂົ້າຮ່ວມວຽກງານຂະບວນການເພື່ອຂໍ່ານັບຮັບຕ້ອນສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງພັກ-ຂອງຊາດ ແລະ ວຽກງານອື່ນໆຢ່າງມີຜົນສຳເລັດ.

ກອງປະຊຸມໄດ້ເສີມຂະຫຍາຍປະຊາທິປະໄຕ ເລືອກຕັ້ງເອົາຄະນະໜ່ວຍຊາວໜຸ່ມຮາກຖານກົມເລຂານຸການ ຊຸດໃໝ່ ເຊິ່ງມີຜູ້ສະໝັກ 7 ສະຫາຍ ຍິງ 4 ສະຫາຍ, ເລືອກໄດ້ 5 ສະຫາຍ ຍິງ 3 ສະຫາຍ ຄື: ສະຫາຍ ນາງ ໂຄຕະມີ ສະຫວັດດີ, ສະຫາຍ ວັນຊະນະ ສີພາໄຊ, ສະຫາຍ ນາງ ບໍ່ແກ້ວ ບຸດໄຊສານ, ສະຫາຍ ບົວສະຫວັນ ໄຊຊະນະ ແລະ ສະຫາຍ ຈິດຕະກອນ ວັນທະວີໄຊ; ກອງປະຊຸມຄັ້ງປະຖົມມະລຶກໄດ້ເຫັນດີເລືອກເອົາສະຫາຍ ນາງ ໂຄຕະມີ ສະຫວັດດີ ເປັນເລຂາ, ສະຫາຍນາງບໍ່ແກ້ວ ບຸດໄຊສານ ເປັນຮອງເລຂາ ແລະ ສະເໜີໃຫ້ມີການປຶກສາຫາລືແບ່ງວຽກແບ່ງຄວາມຮັບຜິດຊອບຕາມຫຼັງຕື່ມອີກ.

ໃນໂອກາດນີ້, ສະຫາຍ ສິງຄຳ ວົງພະຈັນ ໄດ້ມີຄຳເຫັນໂອ້ລົມຕໍ່ທີ່ປະຊຸມ ເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ຜົນງານທີ່ຄະນະໜ່ວຍຊາວໜຸ່ມຮາກຖານກົມເລຂານຸການ ແລະ ສະມາຊິກຊາວໜຸ່ມພາຍໃນໜ່ວຍທີ່ຍາດມາໄດ້ໃນໄລຍະຜ່ານມາ. ພ້ອມດຽວກັນນັ້ນ, ກໍໄດ້ເນັ້ນໜັກໃຫ້ຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ກໍຄືສະມາຊິກຊາວໜຸ່ມໃນກົມເລຂານຸການ ສືບຕໍ່ເພີ່ມຄວາມເອົາໃຈໃສ່ບາງບັນຫາ ເປັນຕົ້ນແມ່ນເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກຊາວໜຸ່ມພາຍໃນໜ່ວຍ ໂດຍຈັດຕັ້ງການເຊື່ອມຊຶມນິຕິກຳຂອງພັກ-ລັດ ແລະ ວຽກງານຊາວໜຸ່ມ ໃຫ້ເປັນປົກກະຕິ, ມີເນື້ອໃນເລິກເຊິ່ງ, ຕິດແທດກັບຕົວຈິງ; ເປັນເຈົ້າການຈັດຕັ້ງຜັນຂະຫຍາຍບັນດາມະຕິ, ຄຳສັ່ງ, ນິຕິກຳທີ່ກ່ຽວຂ້ອງ ໂດຍສະເພາະແມ່ນມະຕິກອງປະຊຸມໃຫຍ່ຄັ້ງນີ້ ເປັນແຜນການ, ແຜນງານ, ໂຄງການພ້ອມທັງຕິດຕາມ, ກວດກາ, ກະຕຸກຊຸກຍູ້, ປະເມີນຜົນການຈັດຕັ້ງປະຕິບັດ ແລະ ຂໍທິດຊີ້ນຳຈາກຄະນະໜ່ວຍພັກ, ຄະນະນຳຂັ້ນເທິງ ໃຫ້ເປັນປົກກະຕິ; ຕ້ອງເອົາໃຈໃສ່ບຸກບືນ, ຈັດຕັ້ງປະຕິບັດໜ້າທີ່ການເມືອງ ເປັນຕົ້ນ: ເຕົ້າໂຮມຄວາມສາມັກຄີ, ເປັນເຈົ້າການເຂົ້າຮ່ວມຂະບວນການຂອງອົງການຈັດຕັ້ງ ຢ່າງເປັນປົກກະຕິ, ສ້າງຂະບວນການແຂ່ງຂັນປະຕິບັດວຽກງານວິຊາສະເພາະຕິດພັນກັບຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ ແລະ ຂໍ້ແຂ່ງຂັນ 4 ບຸກ ໂດຍການເຜີຍແຜ່ເຊື່ອມຊຶມ, ຈັດສຳມະນາເວທີແລກປ່ຽນ ແລະ ອື່ນໆ ເປັນຂະບວນການຝຶກຝົນແລະຕໍ່ເນື່ອງພ້ອມທັງສະຫຼຸບຖອດຖອນບົດຮຽນເປັນປະຈຳ; ເຝິກຝົນຫຼໍ່ຫຼອມຕົນເອງ ດ້ວຍການຄົ້ນຄວ້າເຊື່ອມຊຶມ ແລະ ຮໍ່າຮຽນເອົາຄຸນສົມບັດ, ສິນທຳປະຕິວັດ, ຄວາມເປັນແບບຢ່າງຂອງການນຳຊາວໜຸ່ມຮຸ່ນກ່ອນ ພ້ອມທັງເຝິກຝົນຈາກພຶດຕິກຳຕົວຈິງ ແລະ ຮຽນກັບທີ່; ເພີ່ມທະວີການຕິດຕາມກວດກາເປັນປົກກະຕິ, ເອົາໃຈໃສ່ປະຕິບັດກົດໝາຍ, ລະບຽບການຕ່າງໆຂອງຊາວໜຸ່ມວາງອອກ ໂດຍສະເພາະການປະຕິບັດຂໍ້ຫ້າມຕ່າງໆ. ນອກຈາກນັ້ນແລ້ວ ບັນດາສະຫາຍສະມາຊິກຊາວໜຸ່ມຂອງກົມເລຂານຸການ ຈຸດພິເສດແມ່ນຕິດພັນກັບການນຳ; ສະນັ້ນ, ຕ້ອງໄດ້ເອົາໃຈໃສ່ກ່ຽວກັບການຮັກສາຄວາມລັບ, ການຮັກສາເອກະສານສຳຄັນຕ່າງໆ ເພື່ອບໍ່ໃຫ້ຕົກເຮ່ຍເສຍຫາຍ ແລະ ສິ່ງຜົນກະທົບຕໍ່ບົດບາດຂອງການນຳກໍຄືສະພາແຫ່ງຊາດ; ເອົາໃຈໃສ່ຕອບຕ້ານທາງສຽງປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນຖັນແຖວຊາວໜຸ່ມ ເພື່ອແກ້ໄຂໃຫ້ທັນເວລາ ລວມທັງການປະຕິບັດນະໂຍບາຍດ້ານຕ່າງໆ ແລະ ປົກປ້ອງຜົນປະໂຫຍດອັນຊອບທຳຂອງຕົນ.

**(ນາງ ປາກາລັກ ພົມມີໄຊ)**

# ສພຂ ຫຼວງນ້ຳທາ ແລະ ສາລະວັນ ແລກປ່ຽນບົດຮຽນຢູ່ດ່ານບໍ່ເຕັນ



(ສພຊ) - ໃນໂອກາດທີ່ສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາ ແລະ ສພຂ ສາລະວັນ ໄດ້ພົບປະແລກປ່ຽນບົດຮຽນຮ່ວມກັນ, ທ່ານ ສີເຮັງ ຫອມສົມບັດ ປະທານ ສພຂ ສາລະວັນ ພ້ອມດ້ວຍຄະນະ ຍັງໄດ້ເຄື່ອນໄຫວແລກປ່ຽນບົດຮຽນຢູ່ທີ່ດ່ານພາສີສາກົນບໍ່ເຕັນເມື່ອວັນທີ 2 ເມສາ 2024 ໂດຍມີທ່ານ ນາງ ອຸ່ນຫຼ້າ ອ້ຽງລໍລາດ ຮອງປະທານ ສພຂ ຫຼວງນ້ຳທາ ພ້ອມດ້ວຍຄະນະ ເຂົ້າຮ່ວມຕິດຕາມ.

ໂອກາດດັ່ງກ່າວ, ໄດ້ຮັບຟັງການລາຍງານຂອງຄະນະຄຸ້ມຄອງດ່ານສາກົນບໍ່ເຕັນ ກ່ຽວກັບທີ່ຕັ້ງ, ຈຸດພິເສດຂອງດ່ານສາກົນບໍ່ເຕັນ, ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງດ່ານ, ຂໍ້ສະດວກແລະຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານ ແລະ ອື່ນໆ ເຊິ່ງດ່ານສາກົນບໍ່ເຕັນແຫ່ງສປປ ລາວ ເປັນດ່ານໜຶ່ງ ຕັ້ງຢູ່ທິດຕາເວັນອອກຂອງແຂວງຫຼວງນ້ຳທາ, ເປັນດ່ານເຊິ່ງໜ້າກັບດ່ານສາກົນບໍ່ຫານ ແຫ່ງ ສປ ຈີນ, ເປັນດ່ານດິນຕໍ່ແຜ່ນລະຫວ່າງເມືອງຫຼວງນ້ຳທາ ແຂວງຫຼວງນ້ຳທາ ແລະ ເມືອງຫຼ້າກິ່ງ ແຂວງສິບສອງພັນນາມົນທົນຢູນນານ ສປ ຈີນ, ເປັນດ່ານທີ່ມີມູນເຊື້ອອັນດີງາມ, ມີສາຍພົວພັນອັນດີມາຕະຫຼອດໃນການໄປ-ມາ, ທ່ອງທ່ຽວ, ຢ້ຽມຢາມ, ການຄ້າຂາຍ, ການຂົນສົ່ງແລະການແລກປ່ຽນດ້ານຕ່າງໆ. ປັດຈຸບັນ ດ່ານສາກົນບໍ່ເຕັນ ໄດ້ມີສອງຈຸດກວດກາຄື: ດ່ານເທິງ ມີ 02 ຈຸດກວດກາ: ຈຸດທາດຫຼວງ ແລະ ຈຸດຂາເຂົ້າລົດບັນທຸກສິນຄ້າ, ສ່ວນດ່ານລຸ່ມກໍ ແມ່ນດ່ານພາສີ; ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງດ່ານ ນັບແຕ່ຕົ້ນປີມານີ້ ມີຄົນເຂົ້າ-ອອກເມືອງເປັນຄົນປະເທດທີ 3 ກໍເພີ່ມຂຶ້ນ ໂດຍສະເພາະນັກທ່ອງທ່ຽວທີ່ມາເປັນກຣຸບທົວ ຈາກປະເທດໄທ ໃນປີ 2023 ຄົນເຂົ້າເມືອງທັງໝົດ 655.225 ເທື່ອຄົນ ໃນນີ້, ມີຄົນລາວ 207.096 ເທື່ອຄົນ, ຄົນອອກເມືອງທັງໝົດ 624.119 ເທື່ອຄົນ ໃນນີ້, ມີຄົນລາວ 221.573 ເທື່ອຄົນ, ສະເລ່ຍພາຫະນະເບົາເຂົ້າ-ອອກແຕ່ລະວັນ: ເຂົ້າເມືອງ 140 ກ່ວາຄັນ ແລະ ອອກເມືອງ 150 ກ່ວາຄັນ, ສຳລັບລົດບັນທຸກສິນຄ້າແຕ່ລະມື້ ຂາເຂົ້າມີປະມານ 300 ກ່ວາຄັນ ແລະ ຂາອອກ ມີປະມານ 250 ກ່ວາຄັນ; ສິນຄ້າຂາອອກສ່ວນຫຼາຍແມ່ນປະເພດສິນຄ້າກະສິກຳ, ແຮ່ທາດ.

ຕອນບ່າຍວັນດຽວກັນ, ຄະນະຄຸ້ມຄອງດ່ານສາກົນບໍ່ເຕັນຍັງໄດ້ນຳພາຄະນະຜູ້ແທນ ສພຂຫຼວງນ້ຳທາແລະແຂວງສາລະວັນ ທັດສະນະ ແລະ ທ່ຽວຊົມສູນວາງສະແດງແຜນຜັງຂອງເຂດເສດຖະກິດພິເສດບໍ່ເຕັນແດນງາມ, ຈຸດກວດກາຂາເຂົ້າຂອງລົດບັນທຸກສິນຄ້າ ແລະ ຈຸດກວດກາ ເຂົ້າ-ອອກ ດ່ານສາກົນບໍ່ເຕັນຕື່ມອີກ.

**(ນັກຂ່າວ ສພຂ ຫຼວງນ້ຳທາ ແລະ ສາລະວັນ)**

# ສຳເລັດກອງປະຊຸມໃຫຍ່ ຄັ້ງທີ II ຂອງກຳມະບານຮາກຖານ ສພຂ ໄຊສົມບູນ



(ສພຊ) - ໃນວັນທີ 02 ເມສາ 2024 ສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ໄດ້ສຳເລັດກອງປະຊຸມໃຫຍ່ ຄັ້ງທີ II ຂອງກຳມະບານຮາກຖານ ໂດຍໄດ້ຈັດຂຶ້ນທີ່ຫ້ອງປະຊຸມຂອງສານປະຊາຊົນແຂວງ ພາຍໃຕ້ການເປັນປະທານຂອງສະຫາຍ ຣີເຢັງ ໄຊຕຸກກີ ປະທານກຳມະບານຮາກຖານ ສພຂ, ທົວໜ້າຂະແໜງບັນດາເຜົ່າ ແລະ ເຂົ້າຮ່ວມໂດຍສະຫາຍ ພັອ. ວິໄຊທໍ່ເພຍຫຼວງຈົ່ງເສີ ຮອງເລຂາໜ່ວຍພັກ, ຮອງປະທານ ສພຂ ແລະ ສະຫາຍ ຈູ່ຢ່າງ ດຣາຈົ້ງ ຮອງປະທານສະຫະພັນກຳມະບານແຂວງ;

ອ່ານຕໍ່ໜ້າ 11

## ພົບປະລະຫວ່າງຄະນະຜູ້ແທນ ສພຂ ຄຳມ່ວນ ກັບ ສພຂ ກວາງບິ່ງ



(ສພຊ) - ໃນວັນທີ 05 ເມສາ2024 ທີ່ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ຈັດກອງປະຊຸມພົບປະລະຫວ່າງຄະນະຜູ້ແທນ ສພຂ ຄຳມ່ວນ ສປປ ລາວ ກັບ ສພຂ ກວາງບິ່ງ ສສ. ຫວຽດນາມ ເຊິ່ງຝ່າຍ ສພຂ ຄຳມ່ວນ ນຳໂດຍສະຫາຍ ບຸນມີ ພິມມະສອນ ຮອງເລຂາພັກແຂວງ, ປະທານ ສພຂ ຄຳມ່ວນ ພ້ອມດ້ວຍຄະນະ ແລະ ຝ່າຍ ສພຂ ກວາງບິ່ງ ນຳໂດຍສະຫາຍ ເຈິ່ນ ຮ່າຍ ເຈົາ ຮອງເລຂາຜູ້ປະຈຳການຄະນະພັກແຂວງ, ປະທານ ສພຂ ກວາງບິ່ງ ສສ. ຫວຽດນາມ ພ້ອມດ້ວຍຄະນະ.

ໃນການພົບປະຄັ້ງນີ້, ສະຫາຍ ບຸນມີ ພິມມະສອນ ໄດ້ສະແດງຄວາມຍິນດີຕ້ອນຮັບແລະຕີລາຄາສູງຕໍ່ ສະຫາຍ ເຈິ່ນ ຮ່າຍ ເຈົາພ້ອມດ້ວຍຄະນະທີ່ໄດ້ເດີນທາງມາຢ້ຽມຢາມແຂວງຄຳມ່ວນ ແລະ ຂໍຝາກຄວາມຢ້ຽມຢາມຖາມຂ່າວ, ຄວາມນັບຖືຮັກແພງໄປຍັງສະຫາຍ ເລຂາພັກແຂວງ, ການນຳຂອງແຂວງຕະຫຼອດເຖິງປະຊາຊົນບັນດາເຜົ່າແຂວງກວາງບິ່ງທຸກທົ່ວໜ້າທີ່ຍາມໃດກໍໄດ້ໃຫ້ການຮ່ວມມືແລະຊ່ວຍເຫຼືອແຂວງຄຳມ່ວນ. ພ້ອມນັ້ນ, ທ່ານຍັງໄດ້ລາຍງານການເຄື່ອນໄຫວວຽກງານຂອງ ສພຂ ຄຳມ່ວນ ໂດຍສັງເຂບໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມ 3 ພາລະບົດບາດຕົ້ນຕໍຄື: ດ້ານການພິຈາລະນາ ແລະ ຮັບຮອງເອົານິຕິກຳທີ່ສຳຄັນຂອງທ້ອງຖິ່ນ, ການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ວຽກງານຕິດຕາມກວດກາການເຄົາລົບປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການປົກຄອງທ້ອງຖິ່ນ.

ສະຫາຍ ເຈິ່ນ ຮ່າຍ ເຈົາ ໄດ້ສະແດງຄວາມຂອບໃຈຕໍ່ສະຫາຍ ປະທານ ສພຂ ຄຳມ່ວນ ພ້ອມດ້ວຍຄະນະ ທີ່ໄດ້ໃຫ້ການຕ້ອນຮັບຄະນະຢ່າງອົບອຸ່ນເຕັມໄປດ້ວຍໄມຕີຈິດມິດຕະພາບ, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ, ປະຊາຊົນສອງຊາດລາວ-ຫວຽດນາມເວົ້າລວມ ເວົ້າສະເພາະກໍຄືແຂວງຄຳມ່ວນ-ກວາງບິ່ງ; ຈາກນັ້ນ, ສະຫາຍ ປະທານສພຂກວາງບິ່ງໄດ້ລາຍງານການເຄື່ອນໄຫວວຽກງານຂອງ ສພຂ ກວາງບິ່ງໃນໄລຍະຜ່ານມາ ແລະ ຄະນະຜູ້ແທນສອງຝ່າຍກໍໄດ້ແລກປ່ຽນຄຳເຫັນ, ເນື້ອໃນບາງບົດຮຽນ, ປະສົບການໃນການເສີມຂະຫຍາຍວຽກງານເພື່ອຍົກສູງຄຸນນະພາບການຈັດຕັ້ງປະຕິບັດເຄື່ອນໄຫວວຽກງານຂອງສະພາປະຊາຊົນຂັ້ນແຂວງໃຫ້ມີປະສິດທິພາບສູງຂຶ້ນ, ປະທານ ສພຂ ກວາງບິ່ງ ຍັງໄດ້ເຊື້ອເຊີນຄະນະຜູ້ແທນ ສພຂ ຄຳມ່ວນ ເຂົ້າຮ່ວມຕິດຕາມ, ການຈັດຕັ້ງກອງປະຊຸມວຽກງານຂອງ ສພຂ ກວາງບິ່ງ ທີ່ຈະໄດ້ຈັດຂຶ້ນໃນບໍ່ດົນຕໍ່ໜ້ານີ້.

ເນື່ອງໃນໂອກາດປີໃໝ່ລາວ ທີ່ໃກ້ຈະມາເຖິງນີ້ສະຫາຍ ເຈິ່ນ ຮ່າຍ ເຈົາ ໄດ້ອວຍພອນໄຊອັນປະເສີດມາຍັງສະຫາຍ ບຸນມີ ພິມມະສອນ ພ້ອມດ້ວຍບັນດາການນຳຂອງແຂວງ, ພະນັກງານ, ສະມາຊິກພັກ, ທະຫານ, ຕຳຫຼວດຕະຫຼອດເຖິງພໍ່ຄ້າຊາວຂາຍ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າຊາວແຂວງຄຳມ່ວນຈົ່ງມີແຕ່ສຸຂະພາບເຂັ້ມແຂງ, ແຂງແຮງ, ມີຜົນສຳເລັດໃນໜ້າທີ່ວຽກງານອັນສູງສົ່ງ, ມີຄວາມເບີກບານມ່ວນຊື່ນ ສືບຕໍ່ພັດທະນາແຂວງຄຳມ່ວນ ໃຫ້ຈະເລີນກ້າວໜ້າຍິ່ງຂຶ້ນ.

**(ເອື້ອ ມະໂນສິງ)**

## ສພຂ ອຸດົມໄຊ ສະຫຼຸບຂະບວນການແຂ່ງຂັນ ຮັກຊາດ ແລະ ພັດທະນາ ປະຈຳປີ 2023

(ສພຊ) - ຕອນເຊົ້າວັນພຸດທີ 3 ເມສາ 2024 ຢູ່ທີ່ຫ້ອງປະຊຸມອົງການໄອຍະການປະຊາຊົນແຂວງອຸດົມໄຊ ໄດ້ຈັດກອງປະຊຸມສະຫຼຸບຂະບວນການແຂ່ງຂັນ ຮັກຊາດ ແລະ ພັດທະນາ ປະຈຳປີ 2023 ຂອງສະພາປະຊາຊົນແຂວງຂຶ້ນຢ່າງເປັນທາງການ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ, ມີຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການ, ແຂກເຊີນ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງອຸດົມໄຊ ເຂົ້າຮ່ວມຢ່າງພ້ອມພຽງ.




ກອງປະຊຸມ, ທ່ານນາງ ວັນສີ ພວງມະໄລ ເລຂາທິການສະພາປະຊາຊົນແຂວງ ໄດ້ຜ່ານຮ່າງບົດສະຫຼຸບຂະບວນການແຂ່ງຂັນ ຮັກຊາດ ແລະ ພັດທະນາ ປະຈຳປີ2023 ໂດຍຍົກໃຫ້ເຫັນເຖິງຜົນສຳເລັດໃນການຈັດຕັ້ງປະຕິບັດພາລະບົດບາດໃນການພິຈາລະນາ ແລະ ຮັບຮອງເອົານິຕິກຳທີ່ສຳຄັນຂອງທ້ອງຖິ່ນ, ການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ຕິດຕາມກວດກາການເຄົາລົບ, ປະຕິບັດລັດຖະທຳມະນູນແລະກົດໝາຍຂອງບັນດາອົງການລັດຂັ້ນທ້ອງຖິ່ນ ແລະ ວຽກງານດ້ານຕ່າງໆ, ລວມທັງດ້ານອ່ອນ-ຂໍ້ຄົງຄ້າງຈຳນວນຫນຶ່ງ, ພ້ອມນັ້ນ, ກອງປະຊຸມໄດ້ເປີດກວ້າງໃຫ້ຜູ້ເຂົ້າຮ່ວມປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ເພື່ອກຳໄດ້ສາເຫດທີ່ພາໃຫ້ມີດ້ານດີ, ດ້ານອ່ອນ-ຂໍ້ຄົງຄ້າງແລະເພື່ອເປັນການຊອກຫາວິທີທາງແກ້ໄຂບັນຫາຕ່າງໆໃນຕໍ່ໜ້າໃຫ້ດີຂຶ້ນກວ່າເກົ່າ.

ຫຼັງຈາກນັ້ນ, ກອງປະຊຸມໄດ້ຮັບຟັງການຜ່ານຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຍ້ອງຍໍຜົນງານປະຈຳປີ 2023 ໃຫ້ຜູ້ທີ່ມີຜົນງານດີເດັ່ນໃນການເຄື່ອນໄຫວປະກອບສ່ວນເຫື່ອແຮງ ເຂົ້າໃນວຽກງານປົກປັກຮັກສາແລະສ້າງສາປະເທດຊາດເວົ້າລວມ ສະເພາະກໍ່ຄືແຂວງອຸດົມໄຊ, ເຊິ່ງມີຜູ້ທີ່ໄດ້ຮັບໃບຍ້ອງຍໍ ມີຈຳນວນ 14 ທ່ານ ຍິງ 7 ທ່ານ, ໄດ້ຮັບໃບຊົມເຊີຍ ຈຳນວນ 19 ທ່ານ ຍິງ 7 ທ່ານ ແລະ ໃຫ້ກຽດມອບໂດຍທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນ ແລະ ທ່ານ ນາງ ຄຳພອນ ພົມມະຈັນ ຮອງປະທານສະພາປະຊາຊົນແຂວງ ແລະ ໄດ້ວາງທິດທາງແຜນການແຂ່ງຂັນ ຮັກຊາດ ແລະ ພັດທະນາ ປະຈຳປີ 2024 ແລະ ຈັບມືແຂ່ງຂັນ ຢ່າງເປັນທາງການ.

ຕອນທ້າຍກອງປະຊຸມ, ທ່ານ ຄຳດີ ວົງລ້ອມ ໄດ້ມີຄຳເຫັນໂອ້ລົມ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ ຮັກຊາດ ແລະ ພັດທະນາ ປະຈຳປີ 2024 ໄດ້ຮັບການຈັດຕັ້ງຜັນຂະຫຍາຍໃນຕໍ່ໜ້າ ແລະ ໄດ້ເນັ້ນໜັກໃຫ້ຄະນະຮັບຜິດຊອບເປັນເຈົ້າການນຳພາ-ຊີ້ນຳການຈັດຕັ້ງປະຕິບັດຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ ປະຈຳປີ 2024 ໂດຍວາງແຜນການລະອຽດໃນການຈັດຕັ້ງປະຕິບັດຄາດໝາຍແຕ່ລະໄລຍະ, ປຸກລະດົມ, ຊຸກຍູ້ ແລະ ຍົກສູງວຽກງານແນວຄິດ-ການເມືອງ ຮັບປະກັນສະຕິຕື່ນຕົວໃນການເຂົ້າຮ່ວມຈັດຕັ້ງປະຕິບັດຂໍ້ແຂ່ງຂັນ ຢ່າງເປັນຂະບວນການຟົດຟື້ນ, ຕິດຕາມກວດກາການຈັດຕັ້ງປະຕິບັດຂໍ້ແຂ່ງຂັນໃນແຕ່ລະໄລຍະ, ເມື່ອເຫັນບັນຫາຕ້ອງຮີບຮ້ອນລາຍງານຂໍທິດຊີ້ນຳຈາກຄະນະຊີ້ນຳຂອງຕົນ ແລະຍົກສູງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ 3 ພາລະບົດບາດ, ຕາມສິດ ແລະ ໜ້າທີ່ຂອງສະພາປະຊາຊົນແຂວງ.

**(ນັກຂ່າວ ສພຂ ອຸດົມໄຊ)**

## ກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ I ຂອງຄະນະພັກຮາກຖານ ສພຂ ອັດຕະປື

(ສພຊ) - ໃນວັນທີ 3 ເມສາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອັດຕະປື, ກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ I ຂອງຄະນະພັກຮາກຖານ ສພຂ ອັດຕະປື ໄດ້ໄຂຂຶ້ນຢ່າງເປັນທາງການ ພາຍໃຕ້ການເປັນປະທານຂອງສະຫາຍ ນາງ ມີນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານ ສພຂ; ມີບັນດາສະຫາຍເລຂາໜ່ວຍພັກ, ສະມາຊິກພັກສົມບູນ, ບັນດາສະຫາຍຄະນະພັກຮາກຖານຕາງໜ້າຈາກຄະນະຈັດຕັ້ງແຂວງ, ຫ້ອງວ່າການແຂວງ, ກວດກາພັກ-ລັດແຂວງ, ແນວລາວສ້າງຊາດ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ພະແນກຍຸຕິທຳ ແລະ ອົງການຈັດຕັ້ງມະຫາຊົນເຂົ້າຮ່ວມ.




ກອງປະຊຸມໃຫຍ່ຄັ້ງນີ້ ສະຫາຍ ແຫວນຄຳ ປະທຸມມະແສງ ຄະນະໜ່ວຍພັກ ສພຂ ໄດ້ຜ່ານບົດລາຍງານການເມືອງທີ່ຢັ້ງຢືນເຖິງຜົນງານການເຄື່ອນໄຫວການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ເຊິ່ງຍາມໃດກໍໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ນຳພາແນວຄິດໃຫ້ສະມາຊິກພັກຢ່າງເປັນປົກກະຕິ ໂດຍໄດ້ຖືເອົາການດຳເນີນຊີວິດການເມືອງປະຈຳເດືອນພາຍໃນໜ່ວຍ, ຂະແໜງການເປັນບ່ອນຕຳນິສິ່ງຂ່າວ, ກໍ່ສ້າງຊ່ວຍເຫຼືອເຊິ່ງກັນແລະກັນ, ຈັດຕັ້ງເຜີຍແຜ່, ຄົ້ນຄວ້າເຊື່ອມຊຶມ ແລະ ຮ່ຳຮຽນມະຕິຄຳສັ່ງ, ກົດລະບຽບຂອງພັກ ແລະລະບຽບກົດໝາຍຂອງລັດ ແນໃສ່ເຮັດໃຫ້ສະມາຊິກພັກ-ພະນັກງານຮັບຮູ້, ເຂົ້າໃຈ ແລະ ກຳແໜ້ນເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ບັນລຸຕາມຈຸດປະສົງ ແລະ ເປົ້າໝາຍທີ່ວາງໄວ້.

ຂະນະດຽວກັນ, ຍັງໄດ້ຜ່ານທິດທາງແຜນການຂອງຄະນະພັກຮາກຖານ ສພຂ (2024-2028), ແຜນການດຳເນີນງານຂອງຄະນະພັກຮາກຖານ, ແຜນພັດທະນາວຽກງານວິຊາສະເພາະຂອງໜ່ວຍພັກແລະບົດສຳຫຼວດນຳພາລວມຂອງຄະນະໜ່ວຍພັກຊຸດເກົ່າ; ຈາກນັ້ນ, ຜູ້ແທນກອງປະຊຸມໄດ້ປະກອບຄຳເຫັນ ບົນພື້ນຖານພາຍໃຕ້ຫົວຂໍ້ ການກໍ່ສ້າງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ເພື່ອຍົກສູງບົດບາດການນຳພາຂອງພັກ ຕໍ່ກັບອົງການຈັດຕັ້ງມະຫາຊົນແລະພ້ອມກັນສຸມສະຕິປັນຍາ, ໃຊ້ສິດປະຊາທິປະໄຕ ແລະ ຍົກສູງຄວາມຮັບຜິດຊອບ ເຂົ້າໃນການຄົ້ນຄວ້າພິຈາລະນາບັນຫາຕ່າງໆຕາມສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນກົດລະບຽບຂອງພັກ, ນອກຈາກນີ້ ຄະນະໜ່ວຍພັກຊຸດເກົ່າກ່າວລາໜ້າທີ່ ແລະ ຄະນະຈັດຕັ້ງແຂວງຜ່ານມະຕິຍຸບໜ່ວຍພັກ

ອ່ານຕໍ່ໜ້າ 11



## ຕິດຕາມ...

(ຕໍ່ຈາກໜ້າ 1)

ຍຸຕິທຳແລະຄະນະໄດ້ລົງເຄື່ອນໄຫວວຽກງານຢູ່ 3 ແຂວງພາກໃຕ້ ຄື: ອັດຕະປື, ສາລະວັນ ແລະ ແຂວງຈຳປາສັກ ຕາມລຳດັບ ເພື່ອເຂົ້າຮ່ວມກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ຫ້ອງປະຊຸມສະພາປະຊາຊົນແຂວງ; ມີການເຂົ້າຮ່ວມຂອງທ່ານປະທານສະພາປະຊາຊົນແຂວງ, ຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຕາງໜ້າຈາກສານປະຊາຊົນແຂວງ, ໄອຍະການປະຊາຊົນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ບັນດາພະແນກການ ແລະ ອົງການທີ່ກ່ຽວຂ້ອງຂອງ 3 ແຂວງດັ່ງກ່າວ.

ກອງປະຊຸມໄດ້ຮັບຟັງການລາຍງານຂອງພະແນກຍຸຕິທຳແຂວງ ກ່ຽວກັບການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານສະບັບປັບປຸງປີ2021 ແລະ ສະພາບການຈັດຕັ້ງປະຕິບັດວຽກງານປະຕິບັດຄຳຕັດສິນຂອງສານແຕ່ລະຂັ້ນ; ການລາຍງານກ່ຽວກັບສະພາບການຈັດຕັ້ງປະຕິບັດດຳລັດຂອງລັດຖະບານວ່າດ້ວຍຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ສະບັບເລກທີ280/ນຍ, ລົງວັນທີ09/8/2022 ຈາກບັນດາພະແນກການກ່ຽວຂ້ອງຂອງແຂວງ ເຊິ່ງບັນດາທ່ານຜູ້ເຂົ້າຮ່ວມກອງປະຊຸມ ໄດ້ຍົກໃຫ້ເຫັນຂໍ້ສະດວກ, ດ້ານດີ, ຂໍ້ຫຍຸ້ງຍາກ, ດ້ານຄົງຄ້າງ, ສາເຫດທີ່ພາໃຫ້ມີການແກ່ຍາວ, ບໍ່ສາມາດຈັດຕັ້ງປະຕິບັດໄດ້, ສິ່ງທ້າທາຍຕ່າງໆ, ບາງບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງແກ້ໄຂວຽກງານດັ່ງກ່າວໃນຕໍ່ໜ້າ.

ໃນກອງປະຊຸມຢູ່ທັງ 3 ແຂວງ, ທ່ານປອ. ນາງສູນທອນ ໄຊຍະຈັກ ໄດ້ມີການສະແດງຄວາມຊົມເຊີຍແລະຕີລາຄາສູງຕໍ່ບັນດາອົງການກ່ຽວຂ້ອງຂອງແຂວງ ໃນການສູ້ຊົນຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ແລະ ດຳລັດ 280 ຂອງລັດຖະບານ ແລະ ໄດ້ເນັ້ນໜັກໃຫ້ບັນດາອົງການກ່ຽວຂ້ອງ ສືບຕໍ່ສູ້ຊົນປະຕິບັດກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ; ດຳລັດວ່າດ້ວຍຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ; ການຈັດຕັ້ງປະຕິບັດວຽກງານປະຕິບັດຄຳຕັດສິນຂອງສານແຕ່ລະຂັ້ນໃຫ້ເຂັ້ມງວດແລະເດັດຂາດ. ສະເໜີໃຫ້ຄະນະພັກ, ຄະນະນຳແຕ່ລະຂັ້ນ ເປັນເຈົ້າການນຳພາ-ຊີ້ນຳການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳເທື່ອລະກ້າວ, ໂຄສະນາເຜີຍແຜ່ສ້າງຄວາມຮັບຮູ້ກົດໝາຍໃຫ້ແກ່ສັງຄົມ, ປັບປຸງກົນໄກການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ຖືກຕ້ອງຕາມກົດໝາຍໄດ້ກຳນົດໄວ້, ສຶກສາອົບຮົມພະນັກງານເພີ່ມຄວາມຮັບຜິດຊອບການເມືອງສູງຂຶ້ນກວ່າເກົ່າ ຕິດພັນກັບການຕິດຕາມ, ຊຸກຍູ້ ແລະ ສ້າງເງື່ອນໄຂຄວາມສະດວກໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ໂອກາດດັ່ງກ່າວ, ຄະນະຍັງໄດ້ພົບປະການນຳຂອງ 3 ແຂວງ ທີ່ໄດ້ລາຍງານກ່ຽວກັບສະພາບການພັດທະນາທີ່ພົ້ນເດັ່ນຂອງແຂວງໄລຍະຜ່ານມາ ແລະ ໄດ້ຢ້ຽມຢາມພື້ນຖານການຜະລິດຈຳນວນໜຶ່ງຂອງປະຊາຊົນອີກດ້ວຍ.

**(ນາງ ກຸກກີກ ບຸດດາໄຊ)**

## ຮອງປະທານ...

(ຕໍ່ຈາກໜ້າ 1)

ຮອງເລຂາພັກແຂວງ, ທ່ານວຽງໄຊ ສີວິໄລ ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ. ທັງນີ້, ກໍເພື່ອຕິດຕາມການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ສະບັບປັບປຸງປີ 2021; ເພີ່ມທະວີການຕິດຕາມກວດກາແລະຊຸກຍູ້ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແນໃສ່ຮັບປະກັນເຮັດໃຫ້ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໄດ້ຮັບການປະຕິບັດຢ່າງເຂັ້ມງວດ, ຄົບຖ້ວນ, ຖືກຕ້ອງ ຕາມຄຳຕັດສິນ ແລະ ກົດໝາຍກຳນົດໄວ້ ທັງເປັນຂໍ້ມູນພື້ນຖານກະກຽມລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ກໍຄືກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີIX, ເປັນບ່ອນອີງໃນການປຶກສາຫາລື ແລະ ສະເໜີພາກສ່ວນກ່ຽວຂ້ອງ ຄົ້ນຄວ້າມາດຕະການແກ້ໄຂ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງບົດລາຍງານຈາກທ່ານ ວັນໄຊ ກືໜໍເນັ້ງ ຮອງຫົວໜ້າພະແນກຍຸຕິທຳແຂວງກ່ຽວກັບການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ສະບັບປັບປຸງປີ 2021 ແລະ ສະພາບການປະຕິບັດວຽກງານປະຕິບັດຄຳຕັດສິນຂອງສານແຕ່ລະຂັ້ນທີ່ມີຄວາມຫຍຸ້ງຍາກ, ສາເຫດທີ່ເຮັດໃຫ້ມີການແກ່ຍາວແລະບໍ່ສາມາດປະຕິບັດໄດ້ ເຊິ່ງທ່ານໃຫ້ຮູ້ວ່າ: ສະຖິຕິປະຈຳເດືອນເມສາ 2024 ທົ່ວແຂວງມີຄຳຕັດສິນຂອງສານທັງໝົດ1.253ເລື່ອງຄະດີແພ່ງ 482 ເລື່ອງ, ຄະດີອາຍາ 771 ເລື່ອງ ໃນນັ້ນ, ບໍ່ມີເງື່ອນໄຂປະຕິບັດ 160 ເລື່ອງ ຄະດີແພ່ງ 56 ເລື່ອງ ແລະ ອອກຄຳສັ່ງໂຈະ 40 ເລື່ອງ ແພ່ງ 3 ເລື່ອງ; ຂັ້ນແຂວງ 675 ເລື່ອງ ຄະດີແພ່ງ 175 ເລື່ອງ ຄະດີອາຍາ 500 ເລື່ອງ ໃນນັ້ນ, ບໍ່ມີເງື່ອນໄຂປະຕິບັດ 127 ເລື່ອງ ຄະດີແພ່ງ 49 ເລື່ອງ ແລະ ອອກຄຳສັ່ງໂຈະ 32 ເລື່ອງ ແພ່ງ 1 ເລື່ອງ; ຂອງກາງທີ່ໄດ້ທວງຕາມກົດໝາຍ, ແຕ່ບໍ່ໄດ້ຮັບຄວາມຮ່ວມມືມີ: ໄມ້ດູ່ແປຮູບ 120 ຕັບ ບໍລິມາດ 4.369 ແມັດກ້ອນ, ລົດກະບະ 1 ຄັນ, ລົດຈັກ 14 ຄັນ, ໂທລະສັບ 51 ໜ່ວຍ, ເງິນ 23.643.000 ກີບ 40 ບາດ 9 ໂດລາ ແລະ 75.000 ດົງ. ບົດລາຍງານຈາກທ່ານ ຈູຊົ່ງ ຈື່ໄຊຮອງຫົວໜ້າກອງບັນຊາການ ປກສ ແຂວງ ກ່ຽວກັບການຈັດຕັ້ງປະຕິບັດດຳລັດຂອງລັດຖະບານວ່າດ້ວຍຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ສະບັບເລກທີ280/ນຍ, ລົງວັນທີ 09/8/2022 ໂດຍທ່ານໃຫ້ຮູ້ວ່າສາ ມາດຍຶດ ແລະ ອາຍັດຊັບ 7 ລາຍການ, ຜູ້ຖືກຫາ 17 ຄົນ ຄົນຕ່າງປະເທດ 7 ຄົນ ໃນນັ້ນ, ຄະດີສໍ້ໂກງຊັບ 2 ລາຍ ມູນຄ່າເສຍຫາຍ 3,635 ຕື້ກີບ ໄດ້ອາຍັດຊັບປະເພດລົດດ່ານ 10 ລໍ້ 1 ຄັນ, ໃບຕາດິນ 18.954 ຕາແມັດ; ຄະດີຍັກຍອກຊັບ 1 ລາຍ ມູນຄ່າເສຍຫາຍ 5.949.005.340 ກີບ ໄດ້ອາຍັດຊັບປະເພດລົດກະບະ 1 ຄັນ, ລົດຈັກ 1 ຄັນ; ຄະດີຫຼິ້ນການພະນັນທີ່ຕ້ອງຫ້າມ 1 ລາຍ ໄດ້ຍຶດຊັບປະເພດຄອມພິວເຕີ 20 ໜ່ວຍ; ຄະດີປອມແປງ ແລະ ນຳໃຊ້ເອກະສານປອມ 1 ລາຍ ໄດ້ອາຍັດປະເພດໃບຕາດິນ 1 ໃບ, ເງິນ 38.000 ໂດລາ; ຄະດີຢາເສບຕິດ 2 ລາຍ ໄດ້ຍຶດຊັບປະເພດລົດຕູ້ຄອນເທນເນີ 3 ຄັນ ພ້ອມວັດຖຸຂອງກາງ ໃນນັ້ນ, ມີໄມ້ສັກສຳເລັດຮູບ 10.744ແມັດກ້ອນໄມ້ປະສົມແປຮູບ1.950ແມັດກ້ອນ, ສິນຄ້າຄ້າຍຄືກັນຊາອັດແທ້ງ 360 ແກັດ ນໍ້າໜັກ 6.551 ກິໂລ, ແປ້ງຝຸ່ນສີຂາວ 321 ເປົາ ນໍ້າໜັກ 11.550 ກິໂລ, ປາດສະປໍ 3 ຫົວ; ໄດ້ສະຫຼຸບສົ່ງໄອຍະການປະຊາຊົນແຂວງ 3 ລາຍ, ມອບສຳນວນຄະດີໃຫ້ກົມທີ່ກ່ຽວຂ້ອງຂອງກະຊວງ ປກສ ດຳເນີນ 1 ລາຍ, ປັດຈຸບັນພວມດຳເນີນ 3 ລາຍ.

ຫຼັງຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ຄົ້ນຄວ້າ, ປະກອບຄຳເຫັນ, ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ຢ່າງກົງໄປກົງມາ, ມີເຫດມີຜົນ, ພາວະວິໄສ ແລະ ແທດກັບສະພາບການຕົວຈິງໃນການຂະຫຍາຍຕົວຂອງສະພາບເສດຖະກິດ-ສັງຄົມໃນປັດຈຸບັນ.

ຕອນທ້າຍຂອງກອງປະຊຸມ, ທ່ານ ຈະເລີນ ເຢຍປາວເຮີ ໄດ້ມີຄຳເຫັນເນັ້ນໜັກກ່ຽວກັບການປະຕິບັດກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ສະບັບປັບປຸງປີ 2021, ສະພາບການຈັດຕັ້ງປະຕິບັດວຽກງານປະຕິບັດ ຄຳຕັດສິນຂອງສານຢູ່ແຂວງຊຽງຂວາງ ແລະການຈັດຕັ້ງປະຕິບັດດຳລັດວ່າດ້ວຍຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ທີ່ເຫັນວ່າຍັງມີຂໍ້ຫຍຸ້ງຍາກ, ດ້ານຄົງຄ້າງ ແລະ ສິ່ງທ້າທາຍຕ່າງໆ ຈຶ່ງສະເໜີໃຫ້ຄະນະພັກ, ຄະນະນຳແຕ່ລະຂັ້ນ ເປັນເຈົ້າການນຳພາ-ຊີ້ນຳການຈັດຕັ້ງຜັນຂະຫຍາຍໃຫ້ເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳເທື່ອລະກ້າວ; ການແບ່ງຂັ້ນຄຸ້ມຄອງຕ້ອງໃຫ້ລະອຽດຈະແຈ້ງ ເພື່ອເປັນເອກະພາບກັນໃນການຈັດຕັ້ງປະຕິບັດບັນດານິຕິກຳຕ່າງໆ ໃຫ້ເຂັ້ມງວດ, ສັກສິດ. ສະເໜີໃຫ້ຄະນະນຳສະພາປະຊາຊົນແຂວງຊຽງຂວາງ ເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດບັນດານິຕິກຳໃຕ້ກົດໝາຍຂອງແຂວງ ໃຫ້ແທດເຖິງຕົວຈິງຕື່ມ ໂດຍສະເພາະນິຕິກຳທີ່ຕິດພັນກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານຂັ້ນຕ່າງໆ ເຊິ່ງເຫັນວ່າຍັງມີຫຼາຍດ້ານ, ຫຼາຍບັນຫາ ໄດ້ມີນິຕິກຳຄົບຖ້ວນແລ້ວ ແຕ່ການຈັດຕັ້ງປະຕິບັດຕົວຈິງບໍ່ເຂັ້ມງວດ, ບໍ່ເດັດຂາດ, ບໍ່ໂປ່ງໃສ, ບາງກໍລະນີກໍບໍ່ສາມາດປະຕິບັດໄດ້; ເອົາໃຈໃສ່ເຂົ້າຮ່ວມແຕ່ຫົວທີກັບອົງການປົກຄອງແຂວງ ເຮັດວຽກງານສ້າງ ແລະ ປັບປຸງນິຕິກຳຂອງແຂວງ ພ້ອມທັງເຮັດວຽກງານໂຄສະນາເຜີຍແຜ່ ໃຫ້ມີຄວາມວ່ອງໄວ, ຕໍ່ເນື່ອງ, ທັນກຳນົດເວລາ, ກວ້າງຂວາງແລະເຂົ້າເຖິງທຸກເປົ້າໝາຍທັງພາກລັດ, ເອກະຊົນ ແລະ ປະຊາຊົນລາວບັນດາເຜົ່າດ້ວຍຫຼາຍຮູບການ. ພ້ອມກັນນັ້ນ, ກໍສະເໜີໃຫ້ອົງການປົກຄອງແຂວງ ຈັດສັນດ້ານງົບປະມານ, ພາຫະນະ, ອຸປະກອນຮັບໃຊ້ໄວ້ແຕ່ຫົວທີ ເພື່ອສະໜອງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີປະສິດທິພາບ ແລະ ມີປະສິດທິຜົນ. ໃຫ້ພະແນກຍຸຕິທຳ ສົມທົບກັບກອງບັນຊາການປ້ອງກັນຄວາມສະຫງົບ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງແຂວງ ປັບປຸງບົດລາຍງານຄືນໃຫ້ລະອຽດ ໂດຍວິເຄາະວິໄຈຄັດແນ່ ລົງເລິກແຍກປະເພດຄະດີອາຍາ, ຄະດີແພ່ງ, ຄະດີປັບໃໝຢາເສບຕິດ ມີຈັກຄະ ດີແທ້; ຂອງກາງຄະດີທີ່ເປັນພາຫະນະ, ທີ່ດິນ, ເງິນ, ຄຳ ແລະ ອື່ນໆ ໃຫ້ມີຕົວເລກສະຫຼຸບລະອຽດຈະແຈ້ງຂອງກາງແຕ່ລະປະເພດມີຈຳນວນເທົ່າໃດ, ຍັງຢູ່ໃນສະພາບປົກກະຕິ ແລະ ຄົບຕາມຈຳນວນ ຫຼືບໍ່, ມີອັນໃດແດ່ໄດ້ແກ້ໄຂໄປແລ້ວ ມີອັນໃດແດ່ທີ່ຈະເປ່ເພເສຍຫາຍໃນໄລຍະສັ້ນ ພ້ອມທັງໃຫ້ມີວິທີທາງອອກໃຫ້ແຕ່ລະກໍລະນີ ແລ້ວສົ່ງໃຫ້ສະພາປະຊາຊົນແຂວງ ເພື່ອສະຫຼຸບລາຍງານສົ່ງຄະນະປະຈຳສະພາແຫ່ງຊາດ ໃຫ້ທັນຕາມກຳນົດເວລາ; ຮີບຮ້ອນຄົ້ນຄວ້າປັບປຸງກົງຈັກ, ບຸກຄະລາກອນແລະແບບແຜນວິທີເຮັດວຽກ ທີ່ຕິດພັນກັບວຽກງານປະຕິບັດຄຳຕັດ ສິນຂອງສານໃຫ້ສຳເລັດໂດຍໄວ; ເອົາໃຈໃສ່ສຶກສາອົບຮົມຖັນແຖວພະນັກງານປະຕິບັດຄຳຕັດສິນຂອງສານໃຫ້ມີຄວາມຮັບຜິດຊອບໜ້າທີ່ການເມືອງຂອງຕົນສູງຂຶ້ນ, ມີຄຸນສົມບັດ, ສິນທຳປະຕິວັດ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານໃຫ້ມີປະສິດທິຜົນ; ປະສານສົມທົບກັບຄະນະນຳຂອງແຂວງ ໃນການຄົ້ນຄວ້າປັບປຸງ ແລະ ແກ້ໄຂຂໍ້ຄົງຄ້າງ, ບັນຫາຄວາມຫຍຸ້ງຍາກທີ່ເປັນສິ່ງອຸດຕັນ ເປັນຕົ້ນດ້ານງົບປະມານ, ບຸກຄະລາກອນ, ພາຫະນະ, ເຄື່ອງມືອຸປະກອນຮັບໃຊ້ ແລະ ອື່ນໆ ພ້ອມທັງສະເໜີວິທີການແກ້ໄຂ ເພື່ອເຮັດໃຫ້ວຽກງານປະຕິບັດຄຳຕັດສິນຂອງສານ ໄດ້ຮັບການຈັດຕັ້ງປະຕິບັດຢ່າງສະດວກ, ວ່ອງໄວ ແລະ ມີປະສິດທິຜົນ. ຮີບຮ້ອນແຕ່ງຕັ້ງກອງປະຕິບັດຄຳຕັດສິນຂອງສານເພື່ອໃຫ້ສອດຄ່ອງຕາມກົດໝາຍປະຕິບັດຄຳຕັດ ສິນຂອງສານ; ເອົາໃຈໃສ່ປະຕິບັດດຳລັດຂອງລັດຖະບານ ວ່າດ້ວຍຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ສະບັບເລກທີ280/ນຍ, ລົງວັນທີ09/8/2022 ໂດຍປະສານສົມທົບກັບພະແນກການເງິນຂອງແຂວງ ເພື່ອເກັບກຳ, ຄຸ້ມຄອງ ແລະ ຂຶ້ນບັນຊີຊັບສິນທີ່ຖືກຕັດສິນໃຫ້ຍຶດເປັນຂອງລັດເຂົ້າງົບປະມານຂອງລັດໃຫ້ສຳເລັດ, ຈະແຈ້ງ ແລະ ປົກປັກຮັກສາບໍ່ໃຫ້ຕົກເຮ່ຍເສຍຫາຍ. ອົງການໄອຍະການປະຊາຊົນແຂວງ ເພີ່ມທະວີການປະຕິບັດໜ້າທີ່ໃນການຕິດຕາມກວດກາ ແລະ ປະສານສົມທົບ, ຊຸກຍູ້ ອົງການປະຕິບັດຄຳຕັດສິນຂອງສານ, ເຈົ້າໜ້າທີ່ສືບສວນ-ສອບສວນ, ສານປະຊາຊົນ ໃນການປະຕິບັດຄຳສິນຂອງສານ ໂດຍສະເພາະແມ່ນການປະຕິບັດໂທດທາງອາ ຍາທີ່ໄດ້ຮັບການປະຕິບັດສຳເລັດແລ້ວ, ແຕ່ຍັງບໍ່ສາມາດປະຕິບັດໂທດທາງແພ່ງໄດ້.

**(ນາງ ອາລີນ ສຸພົມມະປະດິດ)**




## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ມາຊິກສະພາຂອງສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ ຈາກ 9 ປະເທດແລະ 2 ອົງການ, ບັນດາທ່ານຮອງປະທານກຳມາທິການ ແລະ ກຳມະການຂອງກຳມາທິການກ່ຽວຂ້ອງຕ່າງໆ ພາຍໃນສະພາແຫ່ງຊາດລາວ ພ້ອມດ້ວຍແຂກຖືກເຊີນຈາກພາກສ່ວນກ່ຽວຂ້ອງຂອງແຂວງ ເຂົ້າຮ່ວມລວມ 72 ທ່ານ.

ໃນການກ່າວເປີດກອງປະຊຸມ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ເນັ້ນໜັກຫຼາຍບັນຫາທີ່ສຳຄັນ ໂດຍສະເພາະແມ່ນສະພາບການພາກພື້ນ ແລະ ສາກົນທີ່ຍັງສືບຕໍ່ເປັນທ່າອຽງທາງດ້ານອຸປະສັກ ແລະ ສິ່ງທ້າທາຍຕໍ່ການກ້າວໄປຂ້າງໜ້າຂອງບັນດາປະເທດຕ່າງໆໃນທົ່ວໂລກ; ພ້ອມທັງໄດ້ເນັ້ນໜັກໃຫ້ຄະນະຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ຈົ່ງພ້ອມກັນແລກປ່ຽນບົດຮຽນ ໂດຍສະເພາະແມ່ນບັນຫາ ແລະ ອຸປະສັກທີ່ເປັນສິ່ງກີດຂວາງໃນການພັດທະນາເສດຖະກິດ-ສັງຄົມ ແລະ ບັນຫາສິ່ງແວດລ້ອມຂອງບັນດາປະເທດສະມາຊິກລັດຖະສະພາທີ່ໃຊ້ພາສາຝຣັ່ງ, ການຊຸກຍູ້ສົ່ງເສີມການນຳໃຊ້ພາສາຝຣັ່ງທີ່ປັດຈຸບັນເຫັນວ່າມີທ່າອຽງຫຼຸດລົງຫຼາຍຖ້າທຽບໃສ່ພາສາອັງກິດ.

ກອງປະຊຸມຍັງໄດ້ຮັບຟັງການສະເໜີບົດກ່ຽວກັບປະສົບການປະຕິບັດວຽກງານຕົວຈິງຈາກບັນດາຊ່ຽວຊານແລະແລກປ່ຽນບົດຮຽນທີ່ດີທີ່ສຸດຮ່ວມກັນຂອງສະມາຊິກສະພາແຫ່ງຊາດບັນດາປະເທດສະມາຊິກ APF; ພ້ອມດຽວກັນນັ້ນ, ຍັງໄດ້ຮັບຮອງເອົາບົດບັນທຶກ ແລະ ຖະແຫຼງການຂອງກອງປະຊຸມສະໄໝສາມັນຄັ້ງຜ່ານມາ, ຮັບຟັງການປະກອບຄຳເຫັນຂອງທ່ານປະທານກຳມາທິການ, ປະທານກອງປະຊຸມ, ຮັບຟັງການລາຍງານຂອງຜູ້ຊ່ຽວຊານດ້ານນິຕິເວດວິທະຍາຂອງ AFD ແລະ FAO, ຮັບຟັງການເຜີຍແຜ່ນິຕິກຳກ່ຽວກັບນະໂຍບາຍດິນຟ້າອາກາດ, ກວດກາຮ່າງບົດລາຍງານ ແລະ ມະຕິເຊັ່ນ: ຮ່າງບົດລາຍງານຄວາມຫຼາກຫຼາຍທາງຊີວະພາບ, ການປົກປ້ອງ ແລະ ປົກປັກຮັກສາຄວາມຫຼາກຫຼາຍທາງຊີວະພາບ, ຮ່າງບົດລາຍງານກ່ຽວກັບຫົວຂໍ້ທີ່ງ່າຍດາຍສຳຫຼັບການມີເສລີພາບຂອງແມ່ຍິງໃນພາກພື້ນອາຟຣິກາທີ່ໃຊ້ພາສາຝຣັ່ງ, ສົນທະນາແລະປຶກສາຫາລືກ່ຽວກັບບົດລາຍງານການຕິດຕາມການເຈລະຈາການຄ້າສາກົນທີ່ດຳເນີນໃນຂອບຂອງອົງການການຄ້າໂລກ (OMC); ພ້ອມທັງໄດ້ປຶກສາຫາລືກ່ຽວກັບວຽກງານຂອງກຳມາທິການໃນອະນາຄົດ, ຮ່າງຄຳເຫັນຂອງຄະນະ APF ສຳຫຼັບກອງປະຊຸມສຸດຍອດຂອງບັນດາປະເທດທີ່ໃຊ້ພາສາຝຣັ່ງປະຈຳປີ 2024 ພາຍໃຕ້ຫົວຂໍ້: "ປັບປຸງການເຄື່ອນໄຫວຂອງພົນລະເມືອງຢູ່ບັນດາປະເທດທີ່ໃຊ້ພາສາຝຣັ່ງ ເພື່ອຊຸກຍູ້ຄວາມຄິດສ້າງສັນ, ນະວັດຕະກຳແລະການປະກອບການ"; ສົນທະນາປົ້ນອ້ອມວຽກງານເສດຖະກິດ, ສົນທະນາກ່ຽວກັບການລົບລ້າງມົນລະພິດຈາກພາດສະຕິກ ແລະ ບັນຫາອື່ນໆ ແລະ ຮັບຮອງວັນເວລາຈັດກອງປະຊຸມຄັ້ງຕໍ່ໄປ.

ກ່ອນເປີດກອງປະຊຸມດັ່ງກ່າວ, ໃນວັນທີ 8 ແລະ 9 ເມສາ 2024 ຄະນະຜູ້ແທນຂອງກອງປະຊຸມ ຍັງໄດ້ເຄື່ອນໄຫວຢ້ຽມຢາມໂຮງຮຽນປະຖົມຫຼວງພະບາງ, ໂຮງຮຽນວິທະຍາໄລຄູຫຼວງພະບາງ ພ້ອມທັງຮັບຟັງການລາຍງານຫຍໍ້ສະພາບການຮຽນການສອນພາສາຝຣັ່ງທົ່ວແຂວງຫຼວງພະບາງ, ເຄື່ອນໄຫວຢ້ຽມຢາມສວນກະເສດອິນຊີ (ສວນອຸ່ນເຮືອນ), ຢ້ຽມຢາມ ແລະ ເຮັດວຽກທີ່ສວນຝາມອາຍອຸ່ນ ເພື່ອຮັບຟັງສະພາບການພັດທະນາການກະເສດສີຂຽວໃນເຂດດັ່ງກ່າວ; ພາຍຫຼັງທີ່ສຳເລັດການເຂົ້າຮ່ວມກອງປະຊຸມແລ້ວ, ຄະນະຜູ້ແທນຍັງຈະໄດ້ຢ້ຽມຊົມຫໍພິພິດທະພັນຫຼວງພະບາງ (ພະລາຊະວັງເກົ່າ), ວັດຊຽງທອງ ແລະ ຕາດກວາງຊີ ເຊິ່ງເປັນສະຖານທີ່ທ່ອງທ່ຽວທີ່ສຳຄັນດ້ານປະຫວັດສາດ ແລະ ທຳມະຊາດຂອງແຂວງຫຼວງພະບາງ.

**(ຂ່າວ: ກຳມາທິການການຕ່າງປະເທດ, ພາບ: ສອນສັກ ວັນວິໄຊ)**

## ຕິດຕາມ...

(ຕໍ່ຈາກໜ້າ 1)

ແນກການ, ຫ້ອງວ່າການແຂວງ, ກອງບັນຊາການທະຫານແຂວງ, ບັນດາຫ້ອງການຂອງເມືອງແລະພາກສ່ວນກ່ຽວຂ້ອງ ກ່ຽວກັບສະພາບການຈັດຕັ້ງປະຕິບັດໂຄງການລົງທຶນຢູ່ຈຸດສຸມພັດທະນາກຸ່ມບ້ານລາວຮຸ່ງ-ພຽງສາ ແລະ ມອງນ້ຳ ເມືອງຊຽງຄໍ້ ແລະ ສະພາບການຈັດຕັ້ງປະຕິບັດໂຄງການລົງທຶນຢູ່ກຸ່ມບ້ານຜາແດງ ເມືອງກວັນ ເຊິ່ງຈຸດສຸມພັດທະນາທັງ 2 ຈຸດ ເປັນເຂດທຸລະກັນດານ, ພູສູງເຫວເລິກ, ເສັ້ນທາງຜ່ານບ້ານເປັນທາງຄົດລ້ຽວກັນດານ, ການສັນຈອນມີຄວາມຫຍຸ້ງຍາກສາມາດທຽວໄດ້ພຽງລະດູດຽວ (ລະດູແລ້ງ); ໃນໄລຍະຜ່ານມາເຫັນວ່າ ໄດ້ຖືເອົາຈຸດສຸມດັ່ງກ່າວ ສ້າງເປັນຈຸດສຸມພັດທະນາໄລຍະໃໝ່ ເພື່ອແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃນເຂດຈຸດສຸມໃຫ້ດີຂຶ້ນ ເຊິ່ງສະແດງໃຫ້ເຫັນຂະບວນການແກ້ໄຂຄວາມທຸກຍາກ ໂດຍມີການເພີ່ມການລົງທຶນເຂົ້າໃສ່ການພັດທະນາເຂດດັ່ງກ່າວຢ່າງມີຈຸດສຸມ, ການຈັດຕັ້ງປະຕິບັດແມ່ນໄດ້ສຸມໃສ່ປັບປຸງບູລະນະສ້ອມແປງພື້ນຖານໂຄງລ່າງເຊັ່ນ: ເສັ້ນທາງ, ໂຮງຮຽນ, ຊົນລະປະທານ, ນ້ຳລິນ, ສຸກສາລາ, ຫ້ອງການກຸ່ມບ້ານ, ປັບສະຖານທີ່ແລະອື່ນໆ.

ທ່ານ ພົທ. ສຸວອນ ເລືອງບຸນມີ ຍັງໄດ້ເປັນປະທານກອງປະຊຸມຊຸກຍູ້ວຽກງານຊົນນະບົດ ແລະ ແກ້ໄຂຄວາມ ທຸກຍາກ ທີ່ສະໂມສອນເມືອງກວັນ ເຊິ່ງໄດ້ຮັບຟັງການລາຍງານສະພາບລວມການພັດທະນາເສດຖະກິດ-ສັງຄົມຂອງເມືອງ ຈາກທ່ານເຈົ້າເມືອງແລະການຈັດຕັ້ງປະຕິບັດບັນດາໂຄງການຢູ່ເຂດພື້ນຖານ ການປະຕິວັດຢູ່ກຸ່ມບ້ານຜາແດງ ຈາກທ່ານ ພັທ. ຄຳແດງ ທຳມະວົງສາ ຫົວໜ້າການເມືອງກອງບັນຊາການທະຫານເມືອງກວັນ ໂດຍໄດ້ຍົກໃຫ້ເຫັນຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຂອງການພັດທະນາເສດຖະກິດ-ສັງຄົມຂອງເມືອງໃນໄລຍະຜ່ານມາ ທັງຍົກໃຫ້ເຫັນການຈັດຕັ້ງປະຕິບັດໂຄງການແລະກິດຈະການໜ້າວຽກຂອງບໍລິສັດເຊິ່ງກຸ່ມບ້ານຜາແດງປະກອບມີ 10 ບ້ານ ເປັນກຸ່ມບ້ານທີ່ມີຊາຍແດນຕິດຈອດກັບ ສສ.ຫວຽດນາມ ມີຄວາມຍາວ 30 ກວ່າກິໂລແມັດ ກວມເອົາ 13 ຫຼັກໝາຍຊາຍແດນ; ປະຊາຊົນມີອາຊີບຕົ້ນຕໍຖາງໄຮ່ເລື່ອນລອຍ, ລ້ຽງສັດໃຫຍ່, ເນື້ອທີ່ນາມີຈຳກັດ ສະເລ່ຍອັດຕາຄວາມທຸກຍາກ 90% ຂອງພົນລະເມືອງ. ໂຄງການພັດທະນາກຸ່ມບ້ານຜາແດງແມ່ນໂຄງການຮ່ວມມືລະຫວ່າງລັດຖະບານ 2 ປະເທດ ລາວ-ຫວຽດນາມ ໂດຍມີ 3 ບໍລິສັດເປັນຜູ້ດຳເນີນໂຄງການ ເຊິ່ງຝ່າຍລາວແມ່ນບໍລິສັດ ສະຫວັນໄຊ ກໍ່ສ້າງ, ຝ່າຍຫວຽດນາມ ມີ 2 ບໍລິສັດຄື: ບໍລິສັດ ໂກເອໂກ ລາວ ຈຳກັດຜູ້ດຽວ ແລະ ບໍລິສັດ ພັດທະນາພູດອຍ ຂຶ້ນກັບບໍລິສັດແມ່ໂກເອໂກ; ສຳລັບກິດຈະກຳຂອງໂຄງການປະກອບມີສ້າງພື້ນຖານໂຄງລ່າງ ເປັນຕົ້ນແມ່ນເສັ້ນທາງປູແຮ່ເຂົ້າແຕ່ລະບ້ານ, ໂຮງຮຽນ, ປ້ອມກວດກາຊາຍແດນ, ນ້ຳລິນ, ສ້າງຕັ້ງໂຮງງານຜະລິດເສັ້ນລ້ອນມັນສາຄູ ແລະ ອື່ນໆ ເຊິ່ງໄດ້ເລີ່ມສຳຫຼວດໃນປີ 2020 ຕາມແຜນແມ່ນຈະລົງມືໃນປີ 2022 ແຕ່ຍ້ອນຜົນກະທົບຈາກສະພາບໂຄວິດ-19 ມາຮອດວັນທີ 23 ພະຈິກ 2023 ຈຶ່ງໄດ້ເລີ່ມລົງມື.

ໃນການເຄື່ອນໄຫວ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ຢ້ຽມຢາມເບິ່ງຈຸດສຸມພັດທະນາກຸ່ມບ້ານລາວຮຸ່ງ-ພຽງສາ ເມືອງຊຽງຄໍ້ ແລະຢ້ຽມຢາມເຮັດວຽກກັບບໍລິສັດ ໂກເອໂກ ເຊິ່ງເປັນໜຶ່ງໃນບັນດາບໍລິສັດຜູ້ດຳເນີນໂຄງການພັດທະນາຈຸດສຸມກຸ່ມບ້ານຜາແດງ ທັງພົບປະປະຊາຊົນຢູ່ບັນດາບ້ານຈຸດສຸມພັດທະນາຄື: ຜາແດງ ແລະ ປຸ່ງຫວາຍ ເພື່ອຮັບຟັງການລາຍງານໂດຍຫຍໍ້ຈາກອຳນາດການປົກຄອງບ້ານ, ຮັບຟັງຄຶດຄຳເຫັນ ແລະ ຄຳສະເໜີຂອງປະຊາຊົນ ທັງໃຫ້ທິດຊີ້ນຳຕໍ່ອຳນາດການປົກຄອງບ້ານ, ໃຫ້ກຳລັງໃຈແລະສະແດງຄວາມຊົມເຊີຍຕໍ່ນ້ຳໃຈຮັກເຊື້ອແພງຊາດຂອງປະຊາຊົນ 2 ບ້ານໃນໄລຍະຕໍ່ສູ້ກູ້ຊາດ ກໍຄືນ້ຳໃຈເສຍສະຫຼະພື້ນທີ່ທຳການຜະລິດ ແລະ ອື່ນໆ ເພື່ອອຳນວຍຄວາມສະດວກໃຫ້ແກ່ການພັດທະນາບ້ານເມືອງໃນປັດຈຸບັນ. ພ້ອມກັນນັ້ນ, ຍັງໄດ້ມອບເຄື່ອງຊ່ວຍເຫຼືອຈຳນວນໜຶ່ງໃຫ້ປະຊາຊົນຂອງ 2 ບ້ານທີ່ໄດ້ເຄື່ອນໄຫວພົບປະ ປະກອບມີ ໝີ່, ເກືອ, ແປ້ງນົວ ແລະ ປາກະປ໋ອງ ລວມມູນຄ່າ 2 ລ້ານກວ່າກີບ ເຊິ່ງໄດ້ຈາກການສົມທົບທຶນຂອງສະພາປະຊາຊົນແຂວງຫົວພັນ ແລະ ຄອບຄົວຂອງທ່ານພົທ. ສຸວອນ ເລືອງບຸນມີ.

**(ນາງ ປາການັກ ພົມມີໄຊ)**





## ປິດເຝິກອົບຮົມ...

(ຕໍ່ຈາກໜ້າ 1)

ສອນພາສາຫວຽດນາມ ຊຸດທີ II ໄລຍະ 2 ເດືອນ, ຜ່ານຂໍ້ຕົກລົງຂອງຄະນະເລຂາທິການສະພາແຫ່ງຊາດວ່າດ້ວຍການເຫັນດີມອບໃບຂອບໃຈ ແລະ ຂໍ້ຕົກລົງວ່າດ້ວຍການເຫັນດີມອບໃບຢັ້ງຢືນ; ຈາກນັ້ນ, ໄດ້ມີພິທີມອບ-ຮັບໃບຢັ້ງຢືນການເຝິກອົບຮົມໃຫ້ແກ່ນັກສຶກສາ ຈຳນວນ 17 ສະຫາຍ ຍິງ 7 ສະຫາຍ ແລະ ມອບໃບຂອບໃຈໃຫ້ແກ່ຄູ-ອາຈານ ຈຳນວນ 3 ສະຫາຍ (ຍິງ).

ສະຫາຍ ຣສຈ. ປອ. ລິນຄຳ ດວງສະຫວັນ ໄດ້ມີຄຳເຫັນຕໍ່ພິທີໃນຄັ້ງນີ້ວ່າ: ຕະຫຼອດໄລຍະການເຝິກອົບຮົມ ແມ່ນສຸດທີ່ມີຄວາມໝາຍ ແລະ ຄວາມສຳຄັນຍິ່ງ ເຊິ່ງບໍ່ພຽງແຕ່ເປັນການຮຽນຮູ້ທາງດ້ານພາສາທີ່ເປັນພື້ນຖານເທົ່ານັ້ນ, ແຕ່ຍັງເປັນການເຝິກຝົນຫຼໍ່ຫຼອມໃນການສ້າງພະນັກງານ-ລັດຖະກອນໃຫ້ມີແນວຄິດບຸກບືນຫ້າວຫັນໃນການຄົ້ນຄ້ວາຮໍ່າຮຽນ, ການປະຕິບັດໜ້າທີ່ວຽກງານໃຫ້ມີຄຸນນະພາບ ທັງເປັນການເສີມສ້າງໃຫ້ມີການຫັນປ່ຽນຢ່າງຕັ້ງໜ້າ ທັງເປັນການປະກອບສ່ວນຮັດແໜ້ນສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດແລະການຮ່ວມມືຮອບດ້ານ ລະຫວ່າງສອງພັກ-ສອງລັດ ແລະ ປະຊາຊົນສອງຊາດ ເວົ້າລວມ, ເວົ້າສະເພາະ ລະຫວ່າງສອງສະພາແຫ່ງຊາດລາວ-ຫວຽດນາມ ໃຫ້ກ້າວສູ່ລວງເລິກ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ. ສະຫາຍເນັ້ນຕື່ມອີກວ່າ: ການເຝິກອົບຮົມພາສາຫວຽດນາມຂັ້ນພື້ນຖານຊຸດນີ້ ໄດ້ສິ້ນສຸດລົງພຽງຂັ້ນຕົ້ນ, ນັກເຝິກອົບຮົມຍັງຕ້ອງໄດ້ສືບຕໍ່ຄົ້ນຄວ້າທົບທວນຄືນເລື້ອຍໆ ເພື່ອກຳແໜ້ນຕື່ມບັນດາບົດຮຽນທີ່ຄູ-ອາຈານຖ່າຍທອດໃຫ້ໂດຍສະເພາະແມ່ນການເຝິກຂຽນ, ອ່ານ, ຟັງ ແລະ ເວົ້າ ໃຫ້ມີຄວາມຄ່ອງແຄ້ວ ແລ້ວນຳໄປໝູນໃຊ້ເຂົ້າໃນວຽກງານຕົວຈິງຂອງຕົນໃຫ້ເກີດຜົນ.

ສະຫາຍເລຂາທິການສະພາແຫ່ງຊາດ ໄດ້ສະແດງຄວາມຂອບໃຈມາຍັງສະຫາຍເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ.ຫວຽດນາມ ປະຈຳ ສປປລາວ ແລະ ຄູ-ອາຈານ ທີ່ມາຈາກສະຖານທູດ ທີ່ຍາມໃດກໍເອື້ອອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືເປັນຢ່າງດີຕໍ່ສະພາແຫ່ງຊາດລາວ ໃນການຍົກລະດັບທາງດ້ານພາສາຫວຽດ ນາມຂັ້ນພື້ນຖານໃຫ້ແກ່ພະນັກງານ-ລັດຖະກອນ ຈົນສຳເລັດ.

**(ນາງ ສຸພາວັນ ທອມສະນິດ)**




# ສິ່ງທີ່ຄວນປະຕິບັດໃນບຸນປີໃໝ່ລາວ

# ດົ້ນກົບເມກ

ບຸນປີໃໝ່ລາວກົງກັບເດືອນເມສາ ຄົນລາວນິຍົມເຮັດບຸນຖວາຍທານແກ່ພະສົງ ອຸທິດສ່ວນບຸນໄປຫາຍາດຜູ້ລ່ວງລັບ ແລະ ເຮັດນ້ຳຫອມໄປຫົດສົງພຸດທະຮູບ ພະສົງ ແລະ ເຖົ້າແກ່ອາວຸໂສ ເພື່ອອວຍພອນ ສິ່ງຄວາມປາຖະໜາດີຕໍ່ກັນ, ຄົນມັກປ່ອຍສັດເອີ້ນວ່າ ໄຖ່ຫຼື ໂຜດເອົາຊີວິດຂອງສັດ ເພາະເຊື່ອວ່າການໂຜດສັດ ໄດ້ບຸນ ພາໃຫ້ອາຍຸຍືນຍາວ ແລະ ບໍ່ບຽດບຽນກັນ ນີ້ກໍແມ່ນວັດທະນະທຳທາງຄວາມຄິດ (ນາມມະທຳ) ຂອງຄົນລາວ ທີ່ບໍ່ຄວນຖືເບົາ ເບິ່ງຂ້າມ ຕໍ່ມາຄົນລາວມັກຈັດພິທີບາສີສູ່ຂວັນ ເພື່ອຜູກແຂນອວຍພອນ ປາດຖະໜາດີຕໍ່ກັນ.

ການຫຼິ້ນບຸນປີໃໝ່ ສຳລັບຄົນລາວ ນິຍົມນຳເອົານ້ຳທີ່ບໍລິສຸດ ສະອາດຫົດສົງໃສ່ກັນ ທັງອວຍພອນແກ່ກັນ ເພາະປີໜຶ່ງມີຄັ້ງດຽວ ແລະ ສິ່ງໜຶ່ງສຳຄັນທີ່ຄົນລາວປະຕິບັດໃນບຸນປີໃໝ່ ຄືການຕົບພະທາດຊາຍ ເຊິ່ງເລື່ອງນີ້ມີໃນ ປະຫວັດພຸດທະສາສະໜາ, ພະທາດຊາຍ ພາສາປາລີເອີ້ນວ່າ: ວາລຸກະເຈດີ ເພື່ອອຸທິດເປັນພຸດທະບູຊາ-ທຳມະ ແລະ ສັງຄະບູຊາ ເຊິ່ງໄດ້ອານິສົງຄື: ຖ້າເກີດເປັນມະນຸດ ຈະເປັນຜູ້ອຸດົມສົມບູນ ຖ້າຕາຍຈາກໂລກນີ້ ຈະເກີດໃນສະຫວັນ ການຕົບພະຊາຍ ຍັງບົ່ງບອກເຖິງຄວາມສາມັກຄີຂອງປະຊາຊົນ ເຖິງແມ່ນວ່າເປັນພຽງເມັດຊາຍ ຖ້າມີສິລະປະ ມີປັນຍາຮູ້ຈັກກໍ່ສ້າງ ກໍສາມາດເຮັດໃຫ້ເປັນພະທາດງົດງາມໄດ້ ຢ່າລືມວ່າປີນີ້ລາວເຮົາເປີດເປັນປີທ່ອງທ່ຽວ ຖ້າມີການຈັດປະກວດຕົບແຕ່ງທາດຊາຍງາມ ຄົງຈະຄຶກຄື້ນ ເປັນການສະແດງເອກະລັກວັດທະນະທຳໃຫ້ຊາວໂລກໄດ້ຮູ້ເຫັນປະເພນີບຸນປີໃໝ່ລາວ.

ການປະຕິບັດຕາມຮີດຄອງປະເພນີ ທີ່ອະທິບາຍມາຂ້າງເທິງ ຍັງບໍ່ພຽງພໍ ປະຊາຊົນລາວຊາວນະຄອນຫຼວງວຽງຈັນ ຕ້ອງເອົາໃຈໃສ່ ຕໍ່ຄຳສັ່ງວ່າດ້ວຍການຮັກສາຄວາມສະຫງົບ... ຂອງເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 01/ຈນວ, ລົງວັນທີ 25 ມີນາ 2024 ໃນໄລຍະຫຼິ້ນບຸນປີໃໝ່ ວັນທີ 13-16 ຮຽກຮ້ອງບໍ່ໃຫ້ປະຊາຊົນ ຫຼິ້ນນ້ຳເປິເປື້ອນ, ນຸ່ງເຄື່ອງໂປ້ເປືອຍ, ຫ້າມຜູ້ຂັບລົດດື່ມເຄື່ອງມຶນເມົາຂະນະທີ່ມີຂໍ້ຫ້າມຕ່າງໆ ອີງຕາມຄຳສັ່ງ ຍັງມີມາດຕະການຕໍ່ຜູ້ລະເມີດ ມີການປັບໃໝ ໃສ່ໂທດ ດັ່ງນັ້ນ ຊາວນະຄອນຫຼວງວຽງຈັນຕ້ອງເອົາໃຈໃສ່ຕໍ່ລະບຽບ ຂໍ້ຫ້າມ-ຄຳສັ່ງ ຂອງທາງການຢ່າງເຄັ່ງຄັດ ເຊິ່ງສຳຄັນ ປີນີ້ເປັນປີທ່ອງທ່ຽວ ທຸກຄົນຕ້ອງໄດ້ເຮັດຄວາມສະອາດໜ້າບ້ານເຮືອນຊານ ຮັກສາຄວາມສະຫງົບ ສະແດງຕົນເປັນເຈົ້າບ້ານທີ່ດີຕໍ່ແຂກຕ່າງປະເທດ ໃຫ້ເຂົາຮູ້ເຫັນ-ປະທັບໃຈ ໃນຮີດຄອງປະເພນີລາວ ສຳຄັນອີກແມ່ນຫ້າມ ພໍ່ຄ້າ-ແມ່ຄ້າ ສວຍໂອກາດຂຶ້ນລາຄາສິນຄ້າເດັດຂາດ ເຫັນໃຈກັນເນີ.






# ງາມ – ສວຍ

'ງາມ' ມີຮາກສັບມາຈາກພາສາຕະກຸນໄຕຕາເວັນຕົກສຽງໃຕ້ດັ້ງເດີມ ເຊິ່ງເປັນຕົ້ນກຳເນີດຂອງຄຳວ່າ 'ງາມ' ຂອງພາສາລາວ, ໄທ, ຍວນ, ໄທໃຫຍ່, ໄທລື້, ໄທດຳ, ໄທແດງ, ໄທຂາວ...

'ງາມ' ເປັນຄຳວິເສດ ໝາຍເຖິງ "ລັກສະນະທີ່ເຫັນແລ້ວພາໃຫ້ຊື່ນໃຈ ເພິ່ງພໍໃຈ, ຈັບເຈືອ, ເປັນຕາໜ້າຮັກ" ເຊັ່ນ

- ເອື້ອຍຂອງລາວເປັນຄົນງາມທັງກາຍ ແລະ ໃຈ.
- ໄກ່ງາມຍ້ອນຂົນ ຄົນງາມຍ້ອນແຕ່ງ.
- ເອື້ອຍກໍງາມ ນ້ອງກໍງາມ ຈະຮັກໃຜດີ.

'ງາມ' ຍັງໝາຍເຖິງ "ມີລັກສະນະສົມບູນດີ" ເຊັ່ນ

- ຜັກສະຫຼັດຢູ່ສວນເຈົ້າປີນີ້ງາມຫຼາຍ.
- ຖ້າຝົນຕົກຖືກຕ້ອງຕາມລະດູການ ເຂົ້ານາປີນີ້ຄົງງາມດີ.
- ປ່າພ້າວແຖວນີ້ງາມຫຼາຍ.

ພ້ອມກັນນັ້ນ 'ງາມ' ຍັງໝາຍເຖິງ "ດີ, ຫຼາຍ, ມີລັກສະນະເປັນໄປຕາມຄວາມຕ້ອງການ" ເຊັ່ນ

- ດວງເຮັງຂາຍລົດຄັນເກົ່າ ໄດ້ກຳໄລງາມ.
- ຝາກເງິນຢູ່ທະນາຄານແຫ່ງນີ້ໄດ້ດອກເບ້ຍງາມ.
- ຄຳແດງເຮັດວຽກຢູ່ບໍລິສັດນີ້ໄດ້ເງິນເດືອນງາມ ແລະ ມີສະຫວັດດີການດີນຳອີກ.

**'ສວຍ'** ເປັນຄຳວິເສດ ເປັນຄຳລາວເດີມທີ່ໃຊ້ຮ່ວມກັບພາສາໄທ. ອີງຕາມວິຊາພາສາສາດດ້ານປະຫວັດ ໄດ້ໃຫ້ຄຳເຫັນວ່າ 'ສວຍ' ແມ່ນມີຮາກຄຳມາຈາກພາສາໄຕຕາເວັນຕົກສຽງໃຕ້ດັ້ງເດີມ ເຊິ່ງມີຄວາມໝາຍວ່າ "ງາມ, ຫຸ່ນດີ".

ໃນວັດຈະນານຸກົມລາວທຸກສະບັບ ລ້ວນແຕ່ໄດ້ບັນທຶກຄຳວ່າ 'ສວຍ' ຢູ່ໃນວັດຈະນານຸກົມຂອງຕົນ ແລະ ໃຫ້ນິຍາມວ່າ "ງາມ, ຈົບ".

ຄຳວ່າ 'ສວຍ' ໃນເມື່ອກ່ອນກໍນິຍົມໃຊ້ເປັນຄຳໂດດໆ ເປັນຄຳຂະຫຍາຍໃຫ້ແກ່ ຍິງສາວ ດັ່ງໃນນິທານກ້ອມ ເລື່ອງ 'ເສືອຍຸດຕິທຳ' ທີ່ລົງພິມໃນໜັງສືພິມລາວໃຫຍ່ ປີ 1941 ມີປະໂຫຍກໜຶ່ງຂຽນວ່າ "ນາຍໂມ້ໄດ້ໃຫ້ແມ່ສື່ໄປຂໍສາວສວຍ ໂດຍບອກວ່າ ເມຍລາວໄດ້ເຖິງແກ່ກຳໄປໄດ້ຫ້າປີແລ້ວ".

ແຕ່ມາປັດຈຸບັນ ເວລານຳໃຊ້ໃນຊີວິດຕົວຈິງ ພວກເຮົາມັກໃຊ້ເຂົ້າຄູ່ກັບຄຳວ່າ 'ງາມ' ເປັນ 'ສວຍງາມ' ດັ່ງບົດກອນ "ເມືອງລາວສວຍງາມຮັ່ງມີ".

ສ່ວນການໃຊ້ຄຳວ່າ 'ສວຍ' ໂດດໆ ກໍມັກມີຢູ່ໃນບົດກອນ-ບົດເພງ ເຊັ່ນ

- ເພງ 'ສາວຊຽງຂວາງທັງງາມທັງເກັ່ງ' ແຕ່ງໂດຍ ໄຊຍະສິນ ສີໂຄດຈຸນນະມາລີ

ໃນທ່ອນສຸດທ້າຍຂອງບົດເພງ ໄດ້ຮ້ອງວ່າ "ໜ້າຮັກແທ້ ນາງສາວຊຽງຂວາງ ໜ້າສວຍໆຕາດຳໆຄໍກົມຄິ້ງບາງ".

- ເພງ 'ຊ່ວຍເຖີດນາງໜໍ່' ແຕ່ງໂດຍ ໄຊພອນ ສິນທະລາດ ໃນທ່ອນທຳອິດ ວັກທີ 3 ໄດ້ຮ້ອງວ່າ "ຂໍໃຫ້ນາງໜໍ່ ຄົນສວຍຊ່ວຍພະຍາບານ".
- ເພງ 'ຊຽງຂວາງແດນງາມ' ແຕ່ງໂດຍ ສ. ບົວລະພັນ ໃນທ່ອນທີສອງ ໄດ້ຮ້ອງວ່າ "ໝູ່ນາງນາດນ້ອຍນາລີ ລອຍຕາມນະທີເປັ່ງລາສີສວຍເດັ່ນ".

ພ້ອມດຽວກັນນັ້ນ ຢູ່ຮ້ານທີ່ເພີ່ມຄວາມງາມໃຫ້ແກ່ແມ່ຍິງທັງຫຼາຍ ກໍເອີ້ນວ່າ "ຮ້ານເສີມສວຍ" ເຊິ່ງກໍໝາຍເຖິງສະຖານທີ່ຮັບເສີມຫຼືເພີ່ມຄວາມງາມໃຫ້ແກ່ແຂກຄົນທີ່ເປັນແມ່ຍິງ.

ສະຫຼຸບແລ້ວ ທັງ 'ງາມ' ແລະ 'ສວຍ' ລ້ວນແຕ່ເປັນຄຳລາວທີ່ໃຊ້ມາແຕ່ອີ່ປຸອີ່ປູ່. ແຕ່ມາປັດຈຸບັນ 'ສວຍ' ມັກຈະໃຊ້ຊ້ອນກັນກັບ 'ງາມ' ເປັນ 'ສວຍງາມ'.




# ວິທີເຮັດວຽກ

### ພາກທີ 5
### ບັນຫາວິທີເຮັດວຽກ

ບາງທີກໍເປັນຍ້ອນພະນັກງານບໍ່ເຂົ້າໃຈເຫດຜົນ ອັນນັ້ນ ຍ້ອນວ່າຢາກເຮັດໃຫ້ໄດ້ວຽກແລ້ວກໍໃຊ້ວິທີຄຳສັ່ງ, ວິທີບັງຄັບໃຫ້ປະຊາຊົນເຮັດ, ຕົກເປັນນິດໄສອາດຍາ, ນິດໄສຂຸນເສິກ, ຈົນວ່າ ລັດຖະບານ ແລະ ພັກຈຳ ເປັນຕ້ອງລົງໂທດກໍມີ. ສຳລັບພວກໂລເລ, ພວກສວຍໂອກາດນັ້ນລົງໂທດແມ່ນຖືກ, ແມ່ນເໝາະສົມ. ແຕ່ສຳລັບພະນັກງານຜູ້ສັດຊື່ຕໍ່ລັດຖະບານ ແລະ ຕໍ່ພັກເລີຍຖືກລົງໂທດ ດັ່ງນັ້ນລັດຖະບານ ແລະ ພັກກໍອຸກໃຈ ແລະ ຜູ້ທີ່ຖືກລົງໂທດກໍອຸກໃຈຄືກັນ. ມັນບໍ່ພຽງແຕ່ວ່າໃນເວລາປະຕິບັດຄຳສັ່ງນັ້ນ ພະນັກງານພວກເຮົາມີທ່າທີຫ່າງໄກປະຊາຊົນເທົ່ານັ້ນ, ໃນວິທີເຮັດວຽກ ແລະ ວິທີຈັດຕັ້ງກໍຍັງມີທ່າທີທີ່ຜິດພາດອີກດ້ວຍ.

ວິທີຈັດຕັ້ງ ແລະ ວິທີເຮັດວຽກທຸກຢ່າງລ້ວນແຕ່ແມ່ນເພື່ອ ຜົນປະໂຫຍດຂອງປະຊາຊົນ ແລະ ເປັນສິ່ງປະຊາຊົນຕ້ອງການທັງມວນ. ດັ່ງນັ້ນວິທີຈັດຕັ້ງ ແລະ ວິທີເຮັດວຽກໃດທີ່ບໍ່ເໝາະສົມກັບປະຊາຊົນນັ້ນ ພວກເຮົາຕ້ອງກ້າຫານສະເໜີໄປ ໃຫ້ຊັ້ນສູງເພື່ອໃຫ້ເລີກຖິ້ມ ຫຼື ແກ້ໄຂປ່ຽນແປງໃໝ່, ວິທີໃດເໝາະສົມກັບປະຊາຊົນ, ປະຊາຊົນຕ້ອງການນັ້ນແມ່ນວ່າຍັງບໍ່ທັນມີ, ພວກເຮົາກໍຕ້ອງສະເໜີ ຂຶ້ນໄປໃຫ້ຊັ້ນສູງເພື່ອວາງອອກໃຊ້. ຖ້າອັນໃດຕ້ອງການເຮັດ ກໍຕ້ອງວາງອອກແລ້ວລາຍງານຕາມຫຼັງ ຂໍໃຫ້ແຕ່ໄດ້ວຽກກໍເປັນພໍ.

ອ່ານຕໍ່ສະບັບໜ້າ...

# ຂຽນຄໍາລາວໃຫ້ຖືກ

#ຄູແສງ

| ຄໍາຖືກ | ຄໍາຜິດ |
|---|---|
| ອານິສົງ | ອະນິສົງ |
| ອານຸພາບ | ອະນຸພາບ |
| ອານາຈັກ | ອະນາຈັກ |
| ອາບັດ | ອະບັດ |
| ອາໂປ | ອະໂປ |
| ອາພັບ | ອະພັບ |
| ອາລະຍະທໍາ | ອະລາຍະທໍາ |
| ອາລະວາດ | ອະລາວາດ |
| ອາວຸໂສ | ອະວຸໂສ |



ສຸກສະບາຍທາຍໂລດ

# ມົນລະພິດທາງອາກາດ ເປັນສາເຫດຂອງຫຼາຍໆໂລກ

ໂດຍ: ທິວກະທິ



ມົນລະພິດໃນອາກາດ ມີຫຼາຍຮູບແບບຄື: ຝຸ່ນຜົງແປ້ງ-ເຄື່ອງສຳອາງ, ຂີ້ຝຸ່ນ, ຂີ້ເຖົ່າແລະຄວັນຈາກການເຜົາໄໝ້ຕ່າງໆ, ຄວັນລົດ, ຄວັນຈາກໂຮງງານ, ການກໍ່ສ້າງຕ່າງໆ, ຝຸ່ນຈາກທາງບໍ່ປູຢາງ, ມົນລະພິດໃນຮູບແບບກ໊າສຄື ການສີດສະເປ, ການສີດຢາຂ້າຫຍ້າ-ຂ້າແມງໄມ້ແລະຍັງມີໃນຮູບແບບອື່ນໆ.

ຜົນກະທົບຈາກມົນລະພິດທາງອາກາດສິ່ງຜົນເສຍຕໍ່ສຸຂະພາບຮ້າຍແຮງກວ່າທີ່ຄິດ ຈາກການສຶກສາວິໄຈສຳຄັນໃນໄລຍະສິບປີທີ່ຜ່ານມາຂອງອົງການອະນາໄມໂລກຄາດຄະເນວ່າມີປະຊາກອນອາຍຸສັ້ນ ເນື່ອງຈາກມົນລະພິດໃນອາກາດທົ່ວໂລກຫຼາຍກວ່າ 6 ລ້ານຄົນໃນແຕ່ລະປີ; ໃນນີ້, ເປັນເດັກນ້ອຍອາຍຸຕ່ຳກວ່າ 5 ປີ ປະມານ 10% ຄືປະມານ 600.000 ຄົນ.

ມີງານວິໄຈຈາກມະຫາວິທະຍາໄລເອດິນບະຣະຂອງປະເທດອັງກິດແລະນັກວິໄຈຈາກໂຮນລັງ (Netherlands) ຮ່ວມກັນເຮັດການທົດລອງເພື່ອຫາຄວາມກ່ຽວຂ້ອງລະຫວ່າງມົນລະພິດໃນອາກາດກັບໂຣກຫົວໃຈ ໂດຍພົບວ່າຝຸ່ນມົນລະພິດຂະໜາດນ້ອຍ (Nano-particles) ສາມາດທະລຸຜ່ານລະບົບການກັ່ນຕອງຂອງດັງ ແລະ ປອດ ເຂົ້າສູ່ກະແສເລືອດໄດ້ເຊິ່ງເປັນການໄປກະຕຸ້ນໃຫ້ຜູ້ປ່ວຍທີ່ມີໂຣກປະຈຳຕົວຢູ່ແລ້ວ ອາການໜັກລົງກວ່າເກົ່າ ເພາະເມື່ອຄຸນນະພາບຂອງອາກາດຫຼຸດລົງ ຕ້ອງມີອັດຕາຂອງຄົນເຂົ້າໂຮງໝໍເພີ່ມຂຶ້ນ ດັ່ງນັ້ນ, ການສູດດົມຝຸ່ນລະອອງທີ່ມີໃນອາກາດເຂົ້າໄປໃນຮ່າງກາຍຈະສົ່ງຜົນເສຍຕໍ່ສຸຂະພາບດັ່ງນີ້:

**ຜົນກະທົບຕໍ່ຫົວໃຈ:** ມົນລະພິດໃນອາກາດ ເຮັດໃຫ້ເກີດໂຣກຫົວໃຈວາຍ, ຫົວໃຈເຕັ້ນຜິດຈັງຫວະ, ເຕັ້ນແຮງເຕັ້ນໄວຂຶ້ນ, ອັດຕາການເຕັ້ນຂອງຫົວໃຈຫຼຸດລົງ ຕະຫຼອດຮອດມີຄວາມສ່ຽງທີ່ຈະເກີດການຕາຍຈາກພາວະຫົວໃຈຢຸດເຕັ້ນກະທັນຫັນ.

ຜົນກະທົບຕໍ່ປອດ ແລະ ທາງເດີນຫາຍໃຈ: ມົນລະພິດເປັນສາເຫດ ແລະປັດໄຈຫຼັກທີ່ເຮັດໃຫ້ເກີດໂຣກກ່ຽວກັບປອດ ແລະ ລະບົບທາງເດີນຫາຍໃຈ, ຫອບຫືດ, ປອດອຸດຕັນຊ້ຳເຮື້ອ ແລະ ມະເຮັງປອດ.

**ຜົນກະທົບຕໍ່ສະໝອງ:** ການສູດດົມມົນລະພິດທາງອາກາດເປັນໄລຍະເວລາຍາວນານ ຈະເພີ່ມຄວາມສ່ຽງເຮັດໃຫ້ຫຼອດເລືອດແດງໃນສະໝອງແຂງຕົວ ເຮັດໃຫ້ເກີດໂຣກຄວາມດັນສູງ.

ສະນັ້ນ, ເພື່ອເຮັດໃຫ້ປະເທດເຮົາ ແລະ ໂລກຂອງພວກເຮົາມີອາກາດທີ່ບໍລິສຸດ ເຮົາຕ້ອງຮັກສາສິ່ງແວດລ້ອມເພື່ອຊ່ວຍກັນເຮັດໃຫອາກາດປອດໂປ່ງ ແລະ ໜ້າຢູ່ຍິ່ງຂຶ້ນ.

**ຂໍ້ມູນຈາກ: www.laopost.com**





## ສະບາຍດີປີໃໝ່ລາວ

**# ກຸຫຼາບເມືອງໃຕ້**

❋ ວັນເວລາເຄື່ອນຍ້າຍ
ເດືອນເມສາສົງການ
ຄົນລາວເໜືອກາງໃຕ້
ປວງປະຊາໃຫຍ່ນ້ອຍ
ເລີຍລ່ວງມາເຖິງ
ຊື່ນບານເຫຼືອລົ້ນ
ກຽມໃຈລໍປີໃໝ່
ຄອຍຖ້າຮ່ວມງານ

❋ ລັດຖະການກໍພ້ອມ
ມີມາໄລດວງຫອມ
ບາສີສູ່ຂວັນເອີ້ນ
ວັນປີໃໝ່ຮອດມື້
ຍໍຍື່ນພອນໄຊ
ດອກຄູນປະດັບເອ້
ມັດແຂນເອົາໂຊກໃຫຍ່
ທົດລ້າງຕໍ່ກັນ ນັ້ນນາ !

❋ ວາລະດີຖືປີໃໝ່ນີ້
ໂພຍໄພໜີລາໄກ
ຄວາມໝົ່ນໝອງເຄີຍເສົ້າ
ປີໃໝ່ນຳພອນໄຊສິ່ງຕ້ອນ
ຂໍຈົ່ງສຸກຂີ
ຢ່າມີມາຕ້ອງ
ຫາຍໄປນຳປີເກົ່າ ພຸ້ນທ້ອນ !
ຊຸມເຈົ້າຈົ່ງສະບາຍ

❋ ກາຍ ແລະໃຈທ່ານນັ້ນ
ມີຄວາມສຸກສົດໃສ
ຫວັງທຸກແນວຂໍໃຫ້
ສີວິໄລຮຸ່ງກ້າວ
ໂລຄາຫ່າງຫາຍໜີ
ດັ່ງດຽວໂດຍແກ້ວ
ປະສົບໄຊໂຊກໃຫຍ່
ມີໄຊກ້າແກ່ນແຂງ

❋ ສົມກັບຄວາມມາດແມ້ງ
ສຸກສຳລານມະໂນໃນ
ປີໃໝ່ລາວມາເຖິງນີ້
ຂໍໃຫ້ລວຍລາບລົ້ນ
ຈິດຊື່ນໃຈບານ
ຮຸ່ງໃສຈະເລີນກ້າວ
ຊີວິດສຸກສົດຊື່ນ
ຕາມໃຈຕັ້ງຕໍ່ປະສົງ

❋ ປີໃໝ່ຈົ່ງພົບພໍ້
ສຸຂະພາບແຂງແຮງ
ເປັນຜູ້ມີໄຊກ້າ
ໄຊຊະນະຍາດໄດ້
ຜົນສຳເລັດຕາມແຜນ
ໂຣກໄພໄກເວັ້ນ
ລາສິງາມສະຫງ່າ
ໃນມື້ໃໝ່ແຫ່ງປີ ທ່ານເອີຍ !



## ໜັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

❋ **ຍິນ**ວ່າໃນໄລຍະເທສະການບຸນປີໃໝ່ລາວຜ່ານມາ ນະຄອນຫຼວງວຽງຈັນ **ຈັດກອງກຳລັງຮັບຜິດຊອບ**ແບບ**ປະຈຳ ແລະ ເຄື່ອນທີ່ 700 ກວ່າຄົນໃນ 100 ກວ່າຈຸດ** ເພື່ອກວດຈັບຄວາມໄວ ແລະ ທາດເຫຼົ້າຕາມສາຍທາງ ໂດຍເນັ້ນ**ອຳນວຍຄວາມສະດວກ, ປອດໄພ** ແລະ ໄປ-ມາເປັນລະບຽບຮຽບຮ້ອຍຕາມທ້ອງຖະໜົນ **ຊົມເຊີຍ!** ຈະລາຈອນຜູ້ກ້າ ສະຫຼະເລື່ອງຄວາມສຸກ **ເພື່ອສ່ວນລວມເປັນຫຼັກ** ວຽກໜັກຮັບຜິດຊອບ ເອັນແລະຄືນຢືນສູ້ ຕາມແລວທາງຮັກສາເລື່ອງຄວາມປອດໄພໃຫ້ພີ່ນ້ອງ ເດີນທາງຫຼິ້ນທ່ຽວສົງການ **ຊົມເຊີຍ !**

❋ **ປີໃໝ່**ລາວລາເລີກແລ້ວ ຈົບຈາກຈອນໄປ ເຊື່ອວ່າຫຼາຍຄົນຍັງອາໄລ ເທດການອັນນັ້ນ ຍາມນັ່ງນອນຍັງຝັນເພີ້ ລະເມີບ່າຄວາມເກົ່າຄິດຮອດຄາວເມື່ອຄັ້ງສະຫຼອງຫຼິ້ນມ່ວນມັນ **ຫຼາຍຄົນ**ນັ້ນ **ຍັງຄົງຝັນວ່າລັບໄນ** ຫຼື ບາງຄົນຍັງອາໄລ ອະດີດຫອານແສນຊົ້ງ **ບາງສ່ວງຊຶງລຶງເສົ້າ** ຜິດຫວັງຫຼັງປີໃໝ່ ເປັນແບວໃດກະຊ່າງທ່ອນ ຂໍໃຫ້ພົ້ນຜ່ານໄປ **ສາເນີ!** ປີໃໝ່ໃຈຕັ້ງ **ກະທຳແຕ່ຄວາມດີ** ທາກສິມີຄົນເຫັນ ຄ່າຄຸນຄວາມດີສ້າງ ທຸກເສັ້ນທາງເດີນກ້າວເອົາຄວາມດີຄຽງຄູ່ ບຸນຊິບ່າສົ່ງຍູ້ ຄົງສົມຫວັງໄດ້ດັ່ງມະໂນ **ດອກນາ!**

## ຊອບຍິ້ມ

*# ແອ່ນຕຸ້ງ*

### ເລື່ອງ: ສາຍຕາສັ້ນ

ມື້ໜຶ່ງທ້າວເສີກໄປຫາປີຕີ, ປີຕີສັງເກດເຫັນໃສ່ແອ່ນຕາ ເລີຍຖາມວ່າ:

- ດຽວນີ້ມຶງຄືໃສ່ແອ່ນຕາ
- ສາຍຕາສັ້ນ
- ອ້າວ! ໄປແທກສາຍຕາມາແລ້ວຫວະ?
- ບໍ່, ຄືວ່າອັນທິດແລ້ວນີ້ໄປຫຼິ້ນເທັກເລີຍພາຜູ້ສາວໄປເຮືອນພັກ
- ແລ້ວມັນກ່ຽວຫຍັງກັບສາຍຕາ?
- ໄປຮອດເຮືອນພັກ ເຂົ້າຫ້ອງເປີດໄຟປຸບ ຈຶ່ງຮູ້ວ່າເປັນເມຍຂອງຕົນເອງ
- !!!!!



## ຄະຕິເຕືອນໃຈ

*#ດອກຫຍ້າ*

ຄວາມດຸໝັ່ນ ປ່ຽນແປງໂຊກຊາຕາ
ຄວາມເມດຕາ ປ່ຽນແປງຊີວິດ

ລັດຖະສະພາຕ່າງປະເທດ

## ຄະນະລັດຖະມົນຕີສີລັງກາອະນຸມັດການປັບປຸງກົດໝາຍການຕ້ານຄວາມຮຸນແຮງໃນຄອບຄົວ

ທ່ານ ນາງ ກີທາ ກຸມານສິງ (Geetha Kumarasinghe) ລັດຖະມົນຕີແຫ່ງລັດກະຊວງກິດຈະການແມ່ຍິງ ແລະ ເດັກນ້ອຍ ກ່າວເມື່ອວັນອັງຄານທີ 02 ເມສາ2024 ວ່າ: ຄະນະລັດຖະມົນຕີສີລັງກາ ໄດ້ອະນຸມັດການປັບປຸງກົດໝາຍວ່າດ້ວຍການຕ້ານຄວາມຮຸນແຮງໃນຄອບຄົວ ທີ່ມີຢູ່ແລ້ວ ແລະ ສະເໜີຮ່າງກົດໝາຍສະບັບໃໝ່ຕໍ່ລັດຖະສະພາ.



ໃນການຖະແຫຼງຂ່າວຢູ່ສູນສື່ມວນຊົນປະທານາທິບໍດີ, ທ່ານລັດຖະມົນຕີແຫ່ງລັດກ່າວວ່າ ລັດຖະບານໄດ້ສ້າງຕັ້ງສູນຊົ່ວຄາວຢູ່ 8 ເມືອງ ສຳລັບແມ່ຍິງທີ່ຖືກທາລຸນ ແລະ ໄດ້ອະນຸມັດຂໍ້ກຳນົດທີ່ຄົນໃກ້ຊິດສະໜິດສະໜົມ ສາມາດຍື່ນຄຳຮ້ອງຟ້ອງແທນແມ່ຍິງທີ່ປະເຊີນກັບຄວາມຮຸນແຮງໃນຄອບຄົວ.

ທ່ານກ່າວກ່ອນໜ້ານີ້ໃນຕົ້ນເດືອນມີນາຜ່ານມາວ່າ ຄະນະລັດຖະບານໄດ້ຮັບຮອງເອົາຮ່າງກົດໝາຍວ່າດ້ວຍການສ້າງຄວາມເຂັ້ມແຂງຂອງແມ່ຍິງ ເຊິ່ງຈະນຳສະເໜີຕໍ່ລັດຖະສະພາໃນໄວໆນີ້.

ທ່ານກ່າວຕື່ມວ່າ ທັນທີທີ່ຮ່າງກົດໝາຍວ່າດ້ວຍການສ້າງຄວາມເຂັ້ມແຂງຂອງແມ່ຍິງຜ່ານລັດຖະສະພາ, ສີລັງກາ ກໍສາມາດສ້າງຕັ້ງຄະນະກຳມະການແຫ່ງຊາດເພື່ອແມ່ຍິງໄດ້; ທະນາຄານໂລກ ຍັງໄດ້ສະໜອງຂໍ້ມູນເຂົ້າໃນຮ່າງກົດໝາຍດັ່ງກ່າວອີກດ້ວຍ.

**ແຫຼ່ງຂ່າວ: ຊິນຮວາ**

# ອະດີດນາຍົກລັດຖະມົນຕີກຳປູເຈຍໄດ້ຮັບເລືອກຕັ້ງເປັນປະທານສະພາສູງ

ໂທລະພາບແຫ່ງຊາດກຳປູເຈຍລາຍງານວ່າ: ວັນພຸດທີ 03 ເມສາຜ່ານມາ, ສະມາຊິກສະພາສູງທັງໝົດ 62 ທ່ານ ທີ່ເຂົ້າຮ່ວມກອງປະຊຸມຄັ້ງປະຖົມມະລຶກຂອງສະພາສູງຊຸດທີ V ໄດ້ເລືອກສົມເດັດ ເຕໂຈ ຮຸນເຊນ ອະດີດນາຍົກລັດຖະມົນຕີກຳປູເຈຍ ເປັນປະທານສະພາສູງ ຢ່າງເປັນເອກະສັນ; ພ້ອມກັນນັ້ນ, ຍັງໄດ້ລົງຄະແນນສຽງເລືອກສະມາຊິກສະພາສູງພັກປະຊາຊົນກຳປູເຈຍທ່ານປຣັກ ໂສຄອນ (Prak Sokhonn) ອະດີດຮອງນາຍົກລັດຖະມົນຕີ ແລະ ອະດີດລັດຖະມົນຕີກະຊວງການຕ່າງປະເທດ ແລະ ທ່ານ ອຸດ ໂບຣິດ (Ouch Borith) ອະດີດລັດຖະມົນຕີອາວຸໂສ ເປັນຮອງປະທານສະພາສູງ ຜູ້ທຳອິດ ແລະ ຮອງປະທານສະພາສູງ ຜູ້ທີ 2 ຕາມລຳດັບ.

ກ່າວຄຳເຫັນຫຼັງຈາກການລົງຄະແນນສຽງ, ສົມເດັດ ເຕໂຈ ຮຸນເຊນ ເຊິ່ງເປັນຫົວໜ້າພັກປະຊາຊົນກຳປູເຈຍໄດ້ສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ສະມາຊິກສະພາສູງທຸກຄົນທີ່ເລືອກທ່ານໃຫ້ດຳລົງຕຳແໜ່ງປະທານສະພາສູງພ້ອມທັງປະຕິຍານວ່າຈະປະຕິບັດໜ້າທີ່ຈົນສຸດຄວາມສາມາດເພື່ອຮັບໃຊ້ປະເທດຊາດ ແລະ ປະຊາຊົນ.

**ແຫຼ່ງຂ່າວ: ຊິນຮວາ**




### ສຳເລັດ...

(ຕໍ່ຈາກໜ້າ 5)

ມີແຂກຕາງໜ້າຈາກອົງການ, ພະແນກການອ້ອມຂ້າງອົງການປົກປ້ອງກົດໝາຍ ຕະຫຼອດຮອດສະມາຊິກກຳມະບານ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ສະຫາຍ ຢີຊົ່ງ ຕົ່ງເລັ່ງ ຮອງເລຂາທິການ ສພຂ, ຮອງປະທານກຳມະບານຮາກຖານ ໄດ້ມີຄຳເຫັນວ່າ: ເພື່ອເປັນການຈັດຕັ້ງປະຕິບັດໜ້າທີ່ຂອງວຽກງານກຳມະບານຮາກຖານທີ່ມີຄວາມໝາຍຄວາມສຳຄັນ ແລະ ແມ່ນວຽກໜຶ່ງຂອງອົງການຈັດຕັ້ງມະຫາຊົນ ໃນອົງກອນລັດທີ່ພາກສ່ວນຕ່າງໆ ແລະ ສພຂ ໄຊສົມບູນຕ້ອງໄດ້ເປີດກອງປະຊຸມໃຫຍ່ຄັ້ງທີ II ຂອງກຳມະບານຮາກຖານຕົນ ເພື່ອຄັດເລືອກເອົາຄະນະຊຸດໃໝ່ ມາຮັບຜິດຊອບໃນໜ້າວຽກນີ້ໂດຍສະເພາະ ແລະ ສະຫາຍໄດ້ ຜ່ານບົດສຳຫຼວດການນຳພາ ແລະ ຮັບຟັງການຜ່ານບົດລາຍງານການເມືອງ 2 ພາກ ໂດຍ ສະຫາຍ ຮີເຢັງ ໂຊຕຸກກີແລ້ວຄະນະຊຸດເກົ່າໄດ້ຮັບໃບຍ້ອງຍໍ 5 ເປັນເຈົ້າ, ຮັບໃບຍ້ອງຍໍບຸກຄົນດີເດັ່ນ ແລະ ໄດ້ເປີດປ້າຍ 5 ເປັນເປັນເຈົ້າ ຂອງກຳມະບານຮາກຖານ ສພຂ ເຊິ່ງໄດ້ນຳພາໂດຍສະຫາຍ ຈູ່ຢ່າງ ດຣາຈົ້ງ; ພ້ອມດຽວກັນນີ້, ສະຫາຍຮີເຢັງ ໂຊຕຸກີແລະສະຫາຍ ຢີຊົ່ງ ຕົ່ງເລັ່ງ ຄະນະປະທານຊຸດເກົ່າ ໄດ້ຂຶ້ນກ່າວລາໜ້າທີ່ ແລະ ຮັບກະຕ່າຂອງຂວັນ.

ໃນໂອກາດນີ້, ສະຫາຍ ວິໄຊທໍ່ ເພຍຫຼວງຈົ່ງເສີ ໄດ້ຜ່ານມາດຖານເງື່ອນໄຂ, ລາຍຊື່ຜູ້ສະໝັກ ແລະ ທີ່ປະຊຸມໄດ້ດຳເນີນປ່ອນບັດເລືອກເອົາຄະນະຊຸດໃໝ່ຈາກສະມາຊິກກຳມະບານທັງໝົດ ໂດຍຜ່ານການປ່ອນບັດເລືອກຕັ້ງ; ໃນກອງປະຊຸມຄັ້ງປະຖົມມະລຶກ ກຳມະບານຮາກຖານຊຸດທີ II ຂອງ ສພຂ ໄດ້ຕົກລົງເຫັນດີເອົາສະຫາຍ ລີຈົ້ງ ເກຍປາວ ເປັນປະທານກຳມະບານຊຸດໃໝ່, ສະຫາຍ ພອນທະວີ ທຳມະໄທ ເປັນຮອງປະທານຜູ້ທີໜຶ່ງ, ສະຫາຍ ລັດທິກອນ ວິນາວົງ ເປັນຮອງປະທານຜູ້ທີສອງ ພ້ອມທັງເປັນຄະນະກວດກາ ແລະ ສະຫາຍ ນາງ ອຳໄພພອນ ແກ້ວວິໄລ ເປັນຮອງກວດກາກຳມະບານຮາກຖານຂອງ ສພຂ.

ບັນດາສະຫາຍຄະນະຊຸດໃໝ່ ໄດ້ຂຶ້ນຮັບຄຳໂອວາດ ແລະ ຮັບໜ້າທີ່ໃໝ່ ເພື່ອຮັດແໜ້ນຄວາມສາມັກຄີ ທັງພາຍໃນ ແລະ ພາຍນອກຂອງຄະນະຊຸດໃໝ່ທີ່ຈະຕ້ອງໄດ້ສືບຕໍ່, ບຸກບືນແລະ ນຳພາສະມາຊິກ ທີ່ນອນຢູ່ໃນຄວາມຮັບຜິດຊອບຂອງຕົນເພື່ອສືບທອດ ແລະ ຮັກສາມູນເຊື້ອອັນດີງາມ, ເໝາະສົມກັບທີ່ໄດ້ຮັບເປັນ ກຳມະບານຮາກຖານ 5 ເປັນເຈົ້າ ຈາກສະຫະພັນກຳມະບານແຂວງ ຈຶ່ງໄດ້ຮັບຟັງຄຳເຫັນໂອ້ລົມຈາກສະຫາຍ ວິໄຊທໍ່ ເພຍຫຼວງຈົ່ງເສີ ແລະສະຫາຍ ຈູ່ຢ່າງ ດຣາຈົ້ງ ເຮັດໃຫ້ກອງປະຊຸມໄດ້ຈົບລົງຢ່າງສະຫງ່າງາມ.

**(ນາງ ອຳໄພພອນ ແກ້ວວິໄລ)**



### ກອງປະຊຸມ...

(ຕໍ່ຈາກໜ້າ 6)

ແລະ ສ້າງຕັ້ງເປັນຄະນະພັກຮາກຖານ ສພຂ ຢ່າງເປັນທາງການ.

ກອງປະຊຸມຄັ້ງນີ້, ສະມາຊິກພັກສົມບູນຍັງໄດ້ໃຊ້ສິດປະຊາທິປະໄຕຂອງຕົນປ່ອນບັດຄັດເລືອກເອົາຄະນະພັກຮາກຖານ ສພຂ ອັດຕະປື ຊຸດໃໝ່ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ທັງຖືກຕ້ອງສອດຄ່ອງກັບມາດຖານເງື່ອນໄຂທີ່ກຳນົດໄວ້ ເຊິ່ງມີຜູ້ອອກຮັບສະໝັກເລືອກຕັ້ງທັງໝົດ 7 ສະຫາຍ ຍິງ 3 ສະຫາຍ ແລະ ໄດ້ເລືອກເອົາ 5 ສະຫາຍ; ຈາກນັ້ນ, ໄດ້ເປີດກອງປະຊຸມຄັ້ງປະຖົມມະລຶກ ເຊິ່ງກອງປະຊຸມໄດ້ເລືອກເອົາສະຫາຍ ແຫວນຄຳ ປະທຸມແສງ ເປັນເລຂາຄະນະພັກຮາກຖານ ສພຂ, ສະຫາຍ ນາງ ຈັນທະລີ ສີສຸວົງ ເປັນຮອງເລຂາ ແລະ ປະທານກວດກາພັກ, ສະຫາຍ ແສງປະດິດ ສຸດນາມສຸລິນ ເປັນຮອງປະທານກວດກາພັກ; ສະຫາຍ ນາງ ແສງອາລຸນ ວົງສາທິການ ແລະສະຫາຍ ຂັນທະລອນ ພອນວັນນາ ເປັນຄະນະພັກຮາກຖານ.

ໂອກາດນີ້, ຍັງໄດ້ຮັບຟັງການໂອ້ລົມໃຫ້ທິດເຍືອງທາງໃຫ້ແກ່ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ສະມາຊິກພັກຄັ້ງທີ I ຂອງຄະນະພັກຮາກຖານ ສພຂ ຈາກສະຫາຍ ນາງ ມີນາພອນ ໄຊສົມພູ ເຊິ່ງທ່ານໄດ້ເນັ້ນໜັກໃຫ້ຄະນະບໍລິຫານງານພັກຮາກຖານ ຊຸດໃໝ່ ສືບຕໍ່ຢຶດໝັ້ນອຸດົມການຂອງພັກຢ່າງສະເໝີຕົ້ນສະເໝີປາຍ ກຳແໜ້ນຫຼັກການ ແລະ ທິດນຳແຫ່ງການກໍ່ສ້າງພັກ ໂດຍສະເພາະຕ້ອງຮັກສາລັກສະນະນຳໜ້າຂອງພັກ ເປັນແບບຢ່າງໃນທຸກໆດ້ານຂອງສະມາຊິກພັກແຕ່ລະຂັ້ນ, ເອົາໃຈໃສ່ນຳພາ-ຊີ້ນຳປຸກລະດົມໃນທົ່ວສະມາຊິກພັກ ພະນັກງານ-ລັດຖະກອນທົ່ວສັງຄົມ, ໃຫ້ຍົກສູງບົດບາດຄວາມສາມາດນຳພາຂອງຄະນະພັກຊຸດໃໝ່ ໃຫ້ໄດ້ດີ ແລະ ມີບາດກ້າວອັນໃໝ່ໃນໄລຍະແຫ່ງການປ່ຽນແປງໃໝ່, ໂດຍສະເພາະແມ່ນຕ້ອງໄດ້ນຳພາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງນີ້ ໃຫ້ມີຄຸນນະພາບສູງ ແລະແທດເຖິງກວ່າເກົ່າ, ປັບປຸງຄະນະພັກຄະນະນຳສພຂ ໃຫ້ມີຄວາມປອດໃສເຂັ້ມແຂງ, ໜັກ ແໜ້ນ ແລະ ນຳພາ ສພຂ ອັດຕະປື ໃຫ້ການຫັນປ່ຽນໃໝ່ຢ່າງເລິກເຊິ່ງ ປະຕິບັດຖືກຕ້ອງສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ.

**(ວິມັດ ສີສຸລາດ)**





ບໍລິສັດ ກຸ່ມດວງຈະເລີນ ພັດທະນາກໍ່ສ້າງ ຈຳກັດຜູ້ດຽວ
DDC Group Sole Co.,Ltd
Douang Chaleurn Development Construction Group Sole Co.,Ltd

# ຄວາມຕ້ອງການ ແລະ ນະໂຍບາຍແຮງງານໃນບາງປະເທດ

❖ ວິເສດ ສະແຫວງສຶກສາ

ອີກບໍ່ດົນກໍຈະຮອດວັນກຳມະກອນສາກົນຄືວັນທີ 1 ພຶດສະພາຕໍ່ໜ້ານີ້ ດັ່ງນັ້ນ ຜູ້ຂຽນຈຶ່ງໄດ້ສັງລວມເອົາບັນຫາ ທີ່ພົວພັນກັບແຮງງານ, ບໍ່ວ່າຈະເປັນເລື່ອງນະໂຍບາຍ ກໍຄືການພັດທະນາແຮງງານ. ຢູ່ສ. ເກົາຫຼີປີ2024 ເປັນປີແຫ່ງການປັບປຸງຂະແໜງແຮງງານໃໝ່ ໃຫ້ເໝາະສົມກັບຄວາມຕ້ອງການແຮງງານຕົວຈິງຈາກຕ່າງປະເທດ ໃນນັ້ນ, ຈະມີການອອກເອກະສານອະນຸຍາດແບບໃໝ່ ເພື່ອຮັບເອົາແຮງງານຕ່າງປະເທດເຂົ້າໄປເຮັດວຽກໃນ 4 ຂະແໜງການຕົ້ນຕໍຄື: ຮ້ານອາຫານ, ໂຮງແຮມ-ອາພາດເມັນ, ປ່າໄມ້ ແລະ ສຸດທ້າຍແມ່ນບໍ່ແຮ່. ບັນດາບໍລິສັດ ຫຼື ຜູ້ປະກອບການໃນ 4 ຂະແໜງການນີ້ ສາມາດຍື່ນໃບສະເໜີ ຂໍອະນຸຍາດ ນັບແຕ່ເດືອນເມສາ 2024 ເປັນຕົ້ນໄປ ເພື່ອນຳເຂົ້າແຮງງານຕ່າງປະເທດ.

ຂ່າວບອກວ່າ ໃນ 4 ຂະແໜງການນັ້ນ, ພາກສ່ວນຮ້ານອາຫານ ຈະໄດ້ຮັບບຸລິມະສິດໃນການຮັບເອົາແຮງງານຕ່າງປະເທດເຂົ້າເປັນຜູ້ຊ່ວຍວຽກບໍລິຫານ ແລະ ບໍລິການລູກຄ້າ ຮ້ານອາຫານທີ່ຈະໄດ້ຮັບບຸລິມະສິດນີ້ຕ້ອງເປັນຮ້ານທີ່ດຳເນີນງານມາແລ້ວຫຼາຍກວ່າ 5 ປີ ຫາ 7 ປີ. ຂ່າວນີ້ອາດເປັນປະໂຫຍດສຳລັບແຮງງານລາວທີ່ມີເງື່ອນໄຂ ຫຼື ຕ້ອງການໄປເຮັດວຽກຢູ່ ສ.ເກົາຫຼີ ເພື່ອໃຫ້ມີການກະກຽມຄວາມຮູ້ຄວາມສາມາດໄວ້ສຳລັບ 4 ຂະແໜງການທີ່ກ່າວມາຂ້າງເທິງນັ້ນ. ແນ່ນອນ ຢູ່ ສ.ເກົາຫຼີ ໃນປັດຈຸບັນນັ້ນ ມີບັນຫາຂາດເຂີນແຮງງານໃນຫຼາຍໆຂະແໜງການ ແຕ່ 4 ຂະແໜງການທີ່ກ່າວມານັ້ນ ແມ່ນນອນຢູ່ເປົ້າໝາຍໄດ້ຮັບບຸລິມະສິດ, ຖ້າແຮງງານຕ່າງປະເທດຄົນໃດສາມາດເຂົ້າເຖິງໄດ້ກໍຈະມີຄວາມໝັ້ນຄົງກວ່າ ແລະ ເງິນເດືອນກໍຈະງາມສົມກັບຄຳວ່າ “ງານເດີນເງິນດີ” ແຕ່ຢາກໄດ້ແບບນັ້ນ ກໍຕ້ອງສ້າງຕົນໃຫ້ເປັນແຮງງານຄຸນນະພາບ ບໍ່ແມ່ນແຮງງານດິບແນ່ນອນ. ເລື່ອງທີ່ອອກມາຈາກ ສິງກະໂປ ຫວ່າງບໍ່ດົນມານີ້ ຖືວ່າເປັນຂ່າວດີ ຄືຂ່າວແຜນປັບຂຶ້ນເງິນເດືອນຂັ້ນຕ່ຳສຳລັບແຮງງານຕ່າງປະເທດ ໃນຂະແໜງວິຊາຊີບ ຈາກ 5.000 ໂດລາສິງກະໂປ ມາເປັນ 5.600 ໂດລາສິງກະໂປຕໍ່ເດືອນຕໍ່ຄົນ. ສ່ວນແຮງງານຕ່າງປະເທດໃນຂະແໜງ ວິຊາຊີບດ້ານການເງິນນັ້ນ ຈະປັບຂຶ້ນ ເປັນ 6.200 ໂດລາສິງກະໂປ ຈາກເມື່ອກ່ອນ 5.500 ໂດລາສິງກະໂປ. ສິງກະໂປເປັນປະເທດທີ່ອີງອາໄສແຮງງານຕ່າງປະເທດຫຼາຍທີ່ສຸດ ຄືມີແຮງງານຕ່າງປະເທດຈຳນວນ 1,48 ລ້ານຄົນ ໃນນັ້ນ 197.300 ຄົນ ເປັນແຮງງານສີມື, ແຮງງານຕ່າງປະເທດ ຢູ່ ສິງກະໂປ ສາມາດເຂົ້າເຖິງການປະກັນສັງຄົມ ແລະ ສະຫວັດດີການທີ່ດີ ທັງເງິນເດືອນກໍສູງ, ແຕ່ຕ້ອງຜ່ານການຄັດເລືອກ ກັ່ນຕອງຢ່າງເຂັ້ມງວດ ເພື່ອຮັບປະກັນຄຸນນະພາບ. ຖ້າຢາກໄປເຮັດວຽກຢູ່ ສິງກະໂປ ກໍຕ້ອງສ້າງຕົນເອງໃຫ້ເປັນແຮງງານມືອາຊີບແທ້ໆ. ຢູ່ ຍີ່ປຸ່ນ, ບັນຫາຂາດແຄນແຮງງານພາຍໃນ ໄດ້ບັງຄັບໃຫ້ມີການນຳເຂົ້າ ແຮງງານຈາກຕ່າງປະເທດນັບມື້ຫຼາຍຂຶ້ນ ແຕ່ກໍເປັນແຮງງານໃນບັນດາຂະແໜງບຸລິມະສິດທີ່ພົວພັນກັບການເບິ່ງແຍງຜູ້ເຖົ້າ, ການລ້ຽງດູເດັກ ກໍຄືແຮງງານທັກສະສູງ ດ້ານເຕັກໂນໂລຊີນະວັດຕະກຳ. ມີຂ່າວອອກມາຈາກຍີ່ປຸ່ນ ໃນຕົ້ນເດືອນມີນາ 2024 ນີ້ວ່າ ແຕ່ນີ້ຫາ 5 ປີຂ້າງໜ້າ ຍີ່ປຸ່ນ ຍັງຕ້ອງການແຮງງານຕ່າງປະເທດທັກສະສູງຈຳນວນ800.000ຄົນ. ນອກຈາກຂະແໜງການທົ່ວໆໄປ ທີ່ຕ້ອງການແຮງງານຕ່າງປະເທດແລ້ວ, ໃນ 5 ປີຂ້າງໜ້າ, ທາງການຍີ່ປຸ່ນ ຈະເພີ່ມຂະແໜງການອື່ນໆອີກຕື່ມ ເພື່ອນຳໃຊ້ແຮງງານ ຕ່າງປະເທດເຊັ່ນ ຂະແໜງຂົນສົ່ງທາງບົກ, ທາງລົດໄຟ, ປ່າໄມ້, ອຸດສາຫະກຳໄມ້. ສ່ວນນະໂຍບາຍ ລວມກ່ຽວກັບ ສະຫວັດດີການນັ້ນ ທາງການຍີ່ປຸ່ນໄດ້ຂຶ້ນແຜນອະນຸຍາດໃຫ້ແຮງງານຊາຍ ສາມາດພັກວຽກໄດ້ເພື່ອເບິ່ງແຍງລູກ. ແຕ່ກ່ອນນະໂຍບາຍນີ້ມີສະເພາະໃຫ້ແຮງງານເພດຍິງເທົ່ານັ້ນ. ນະໂຍບາຍໃຫ້ແຮງງານຊາຍທີ່ມີຖານະເປັນພໍ່ຂອງເດັກ ໄດ້ພັກເບິ່ງແຍງລູກນີ້ ກໍເພື່ອແບ່ງເບົາວຽກເຮືອນສຳລັບແມ່ຍິງ, ເພື່ອໃຫ້ຜູ້ຊາຍມີສ່ວນຮ່ວມຮັບຜິດຊອບ ເບິ່ງແຍງລ້ຽງດູລູກຊ່ວຍເມຍ. ທາງການຍີ່ປຸ່ນເຊື່ອວ່າ ນະໂຍບາຍນີ້ຈະເຮັດໃຫ້ ຄູ່ຜົວເມຍ ປວດຢາກມີລູກຕື່ມ ເຊິ່ງຈະເຮັດໃຫ້ອັດຕາ ການເກີດຂອງເດັກເພີ່ມຂຶ້ນ ແລ້ວແຮງງານພາຍໃນກໍຈະເພີ່ມຂຶ້ນໃນຕໍ່ໜ້ານັ້ນເອງ.

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED




## ຄົນຂີ້ຖີ່

#ບ່າວກະບື

ລຸງແດງຊື້ແວ່ນບັງໃຫຍ່ ແລ້ວເອົາໄປຫ້ອຍໄວ້ຢ່າງພິຖີພິຖັນຢູ່ຝາຫ້ອງຮັບແຂກ. ລຸງບອກເມຍ ແລະ ລູກໆວ່າ:

“ ຈົ່ງໄວ້ໃຫ້ດີ, ພວກເຈົ້າມີສິດແຍງແວ່ນນີ້ໜຶ່ງຄັ້ງຕໍ່ອາທິດເທົ່ານັ້ນເນີ, ”

“ ອີ່ພໍ່, ເປັນຫຍັງຈຶ່ງໃຫ້ພວກເຮົາແຍງແວ່ນໄດ້ພຽງຄັ້ງດຽວຕໍ່ອາທິດ? ” ຝ່າຍລູກສາວຖາມຂຶ້ນ.

“ ເພາະ... ເພາະວ່າ... ຖ້າສູເຈົ້າແຍງຫຼາຍເທື່ອ ແວ່ນກໍຈະເປ່ເພ. ຮູ້ບໍ່...? ຕ້ອງປະຢັດ, ຢ່າຟຸມເຟືອຍ! ”.

## STINGY MAN

#BAOKBU

Uncle Daeng has bought a large mirror and carefully hanged it on the wall in the living-room. He told his wife and children: “ Every week, you can look at his mirror only once. Remember that! ” “Daddy, why do we have to do so?” asked his daughter. Uncle Daeng replied: “ Because if you look at it many times, it will be damaged. Economize, don't squander ! ”

## ກາຕູນ




ຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ ຮັກສາສິ່ງແວດລ້ອມຊ່ວຍກັນ

● ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພຶດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພິມມີໄຊ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ